ກະຊວງແຜນການ ແລະ ການລົງທຶນ

ອົງການຮ່ວມມືສາກົນຍີ່ປຸ່ນ ປະຈຳລາວ (ໄຈກ້າ)

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ການຮ່ວມມື ທາງດ້ານວິຊາການ ຂອງ ອົງການໄຈກ້າ

ສ ປ ປ ລາວ

ໂຄງການ ສົ່ງເສີມຄວາມສາມາດ ທາງດ້ານການຄຸ້ມຄອງໂຄງການລົງທຶນຂອງລັດ

(ພີແຄັບ 2)

# ບົດລາຍງານຄວາມຄືບໜ້າ
# (ປີທີ 3)

ກຸມພາ 2010

ໄອຊີແນັດ ຈຳກັດ

ການຮ່ວມມື ທາງດ້ານເຕັກນິກ ວິຊາການ ຂອງ ອົງການຮ່ວມມືສາກົນຍີ່ປຸ່ນ (JICA) ປະຈໍາລາວ

ໂຄງການ ຍົກລະດັບຄວາມອາດສາມາດ ໃນການຄຸ້ມຄອງໂຄງການລົງທຶນລັດໄລຍະ2 (PCAP2)

ບົດລາຍງານຄວາມຄືບໜ້າ ສໍາລັບປີທີ 3

## ສາລະບານ


ສາລະບານ ........ i

ຄໍາສັບຫຍໍ້ ........ iii

1. ໂຄງຮ່າງຂອງໂຄງການ ........ 1

1.1 ພາບລວມ ໂຄງການ ........ 1

1.2 ໂຄງຮ່າງຂອງບົດລາຍງານ ........ 3

2. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ແລະ ໝາກຜົນຂອງຄວາມສໍາເລັດ ........ 5

2.1 [ຜົນໄດ້ຮັບ 3] ກິດຈະກໍາຕ່າງໆ ກ່ຽວກັບ ການສະໜັບສະໜູນ ການໃຫ້ຄໍາປຶກສາ ທາງດ້ານກົດໝາຍ ຂອງການ ຄຸ້ມຄອງໂຄງການລົງທຶນລັດ ........ 5

2.2 [ໝາກຜົນ 1]: ກິດຈະກໍາຕ່າງໆ ສໍາລັບ ການສ້າງຄວາມຮູ້ຄວາມສາມາດ ແລະ ທັກສະຕ່າງໆ (ການຝຶກອົບຮົມ / OJT) ........ 7

2.3 [ໝາກຜົນ 2] ກິດຈະກໍາຕ່າງໆ ສໍາລັບການຄຸ້ມຄອງທາງດ້ານການເງິນ ແລະ ງົບປະມານຂອງໂຄງການລົງທຶນຂອງລັດ ........ 12

2.4 [ໝາກຜົນ 4] ກິດຈະກໍາຕ່າງໆ ເພື່ອປັບປຸງວິທີການຄຸ້ມຄອງ ໂຄງການລົງທຶນຂອງລັດ ........ 17

3. ຄວາມຄືບໜ້າກ່ຽວກັບການສໍາເລັດຈຸດປະສົງຂອງໂຄງການ ........ 29

4. ຜົນກະທົບ ........................................................................................................ 31

5. ບັນຫາຕ່າງໆທີ່ຍັງຄົງຄ້າງ ........................................................................................ 33

6. ການສຶກສາ ການທົບທວນຄືນ ໄລຍະກາງ ........................................................................ 35

7. ປະເດັນສຳຄັນອື່ນໆ ................................................................................................ 39

**ເອກະສານຊ້ອນທ້າຍ**

- ຊ້ອນທ້າຍ 1

# ຄຳສັບຫຍໍ້

| | |
|---|---|
| DOF | ພະແນກ ການເງິນ ແຂວງ |
| DPI | ພະແນກ ແຜນການ ແລະ ການລົງທຶນ ແຂວງ |
| GPAR | ບູລະນະການປົກຄອງ ແລະ ບໍລິຫານລັດ |
| JCC | ຄະນະປະສານງານຮ່ວມ |
| JICA | ອົງການ ຮ່ວມມືສາກົນ ຍີ່ປຸ່ນ ປະຈຳລາວ |
| MPI | ກະຊວງ ແຜນການ ແລະ ການລົງທຶນ |
| MPI-DIC | ກົມ ຮ່ວມມືສາກົນ, ກະຊວງ ແຜນການ ແລະ ການລົງທຶນ |
| MPI-DOE | ກົມ ປະເມີນຜົນ, ກະຊວງ ແຜນການ ແລະ ການລົງທຶນ |
| MPI-DOP | ກົມ ແຜນການ, ກະຊວງ ແຜນການ ແລະ ການລົງທຶນ |
| NSEDP | ແຜນພັດທະນາເສດຖະກິດ - ສັງຄົມແຫ່ງຊາດ |
| ODA | ການຊ່ວຍເຫຼືອ ດ້ານການພັດທະນາ ຢ່າງເປັນທາງການ |
| OJT | ການຝຶກອົບຮົມ ໜ້າວຽກ ກັບທີ່ |
| PCAP | ໂຄງການ ສ້າງຄວາມເຂັ້ມແຂງ ດ້ານການຄຸ້ມຄອງການລົງທຶນລັດ |
| PCAP2 | ໂຄງການ ສ້າງຄວາມອາດສາມາດ ໃນການຄຸ້ມຄອງ ການລົງທຶນລັດ ໄລຍະ2 |
| PIP | ໂຄງການລົງທຶນລັດ |
| PO | ເຈົ້າຂອງໂຄງການ |
| SOP | ມາດຕະຖານ ຂະບວນການ ດຳເນີນງານ |
| SPAS | ແບບຟອມ ປະເມີນຜົນໂຄງການແບບງ່າຍດາຍ |
| UNDP | ອົງການ ສະຫະປະຊາຊາດ ເພື່ອການພັດທະນາ |

# 1. ໂຄງຮ່າງຂອງໂຄງການ

## 1.1 ພາບລວມ ໂຄງການ

ລັດຖະບານ ຂອງ ສປປລາວ ມີເປົ້າໝາຍ ໃນການພັດທະນາ ແລະ ນຳສະເໜີ ວິທີການ ຄຸ້ມຄອງ ໂຄງການລົງທຶນຂອງລັດ, ເຊັ່ນວ່າ: ຂະບວນການວາງແຜນ, ປະເມີນ, ຈັດຕັ້ງປະຕິບັດ ແລະ ປະເມີນຜົນ ລ້ວນແລ້ວແຕ່ແມ່ນມາດຖານທີ່ສຳຄັນທີ່ສຸດ ສຳລັບການປັບປຸງ. ຕາມການສະເໜີຂອງທາງລັດຖະບານ ສປປລາວ ຕໍ່ກັບ ລັດຖະບານຂອງ ຍີ່ປຸ່ນ, ອົງການຮ່ວມມືສາກົນຍີ່ປຸ່ນ (JICA) ໄດ້ປະຕິບັດ ໂຄງການການຮ່ວມມືທາງດ້ານເຕັກນິກ ວິຊາການທີ່ເອີ້ນວ່າ: "ໂຄງການ ສ້າງຄວາມເຂັ້ມແຂງທາງດ້ານການຄຸ້ມຄອງ ໂຄງການລົງທຶນລັດ (PCAP)" ຕັ້ງແຕ່ເດືອນ ພະຈິກ 2004 ຫາ ເດືອນ ຕຸລາ 2007, ໂດຍມີຈຸດປະສົງ ແນໃສ່ເພື່ອພັດທະນາ ວິທີການຄຸ້ມຄອງ ໂຄງການລົງທຶນຂອງລັດ ແລະ ລວມໄປເຖິງ ການສ້າງຄວາມເຂັ້ມແຂງ ໃຫ້ແກ່ພະນັກງານນຳອີກ.

ໂຄງການ PCAP ໄດ້ສິ້ນສຸດລົງໃນເດືອນ ຕຸລາ 2007 ຕາມແຜນງານທີ່ໄດ້ວາງໄວ້. ແຕ່ເຖິງຢ່າງໃດກໍ່ຕາມ, ລັດຖະບານ ຂອງ ສປປລາວ ກໍ່ັັຍັງໄດ້ສະເໜີໃຫ້ມີການ ສືບຕໍ່ສະໜັບສະໜູນ, ດັ່ງນັ້ນ ຈິ່ງເຮັດໃຫ້ເກີດມີຂໍ້ຕົກລົງ ປະຕິບັດ ການຮ່ວມມື ທາງດ້ານເຕັກນິກວິຊາການ ອີກຄື "ໂຄງການຍົກລະດັບຄວາມສາມາດ ໃນການຄຸ້ມຄອງ ໂຄງການລົງທຶນລັດ ໄລຍະ2 (PCAP2)", ເຊິ່ງຫຼັງຈາກນີ້ເອີ້ນວ່າ "ໂຄງການ", ໂດຍມີຈຸດປະສົງເພື່ອປັບປຸງ ຂັ້ນຕອນ ແລະ ວິທີການ ຕ່າງໆ ໃນຕໍ່ໜ້າ ສຳລັບການຄຸ້ມຄອງ ໂຄງການລົງທຶນຂອງລັດ, ພ້ອມທັງເຜີຍແຜ່ ເຄື່ອງມື ແລະ ວິທີການດັ່ງກ່າວ ໂດຍຜ່ານລັດຖະບານ ລະດັບທ້ອງຖິ່ນ ແລະ ລະດັບຊາດ. ອີກຢ່າງໜຶ່ງ, ໂຄງການມີຈຸດປະສົງ ເພື່ອໃຫ້ແນ່ໃຈວ່າ ກະຊວງແຜນການ ແລະ ການລົງທຶນ (MPI)

ຈະເປັນຜູ້ມີພາລະບົດບາດ ນຳພາ ໃນການຮັກສາ ແລະ ຍົກລະດັບ ຄວາມເຂັ້ມແຂງ ທາງດ້ານການຄຸ້ມຄອງ ໂຄງການລົງທຶນລັດໃຫ້ແກ່ພະນັກງານ ຂອງໂຄງການລົງທຶນຂອງລັດ ທົ່ວປະເທດ. ໂຄງການໄດ້ເລີ້ມຕັ້ງ ແຕ່ ເດືອນ ມີນາ 2008, ແລະ ມີຄາດໝາຍທີ່ຈະສຳເລັດໃນເດືອນ ສິງຫາ 2011.

## 1.2 ໂຄງຮ່າງຂອງບົດລາຍງານ

ບົດລາຍງານນີ້ ຊີ້ໃຫ້ເຫັນເຖິງຄວາມສາມາດໃນການ ປະສົບຜົນສຳເລັດ ຂອງໂຄງການ ເຊິ່ງໂຄງການໄດ້ເລີ້ມແຕ່ເດືອນ ມີນາ 2008 ຈົນເຖິງ ເດືອນມັງກອນ 2010, ໂດຍຄວາມຄືບໜ້າຂອງກິດຈະກຳຕ່າງໆ ແມ່ນໄດ້ປະຕິບັດໃນ 4 ເດືອນຜ່ານມາ ນັບຈາກເດືອນ ຕຸລາ 2009. ຕາຕະລາງຕໍ່ໄປນີ້ແມ່ນການສັງລວມ ໂຄງຮ່າງຂອງບົດລາຍງານ.

| |
|---|
| 1. ໂຄງຮ່າງ ຂອງໂຄງການ |
| ໂຄງຮ່າງຂອງບົດລາຍງານ ແລະ ການສັງລວມ ບົດລາຍງານນີ້ ແມ່ນໄດ້ຖືກນຳສະເໜີ. |
| 2. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ແລະ ໝາກຜົນຂອງຜົນສຳເລັດ |
| ໂຄງການແມ່ນໄດ້ເລີ້ມລົງມື ໃນປີທີ 3, ແລະ ໄດ້ດຳເນີນໄປຕາມແຜນຕົວແບບທີ່ໄດ້ວາງເອົາໄວ້.<br>[ໝາກຜົນ 3: ກົດໝາຍວ່າດ້ວຍ ການລົງທຶນຂອງລັດ] ກົດໝາຍວ່າດ້ວຍການລົງທຶນຂອງລັດ ແມ່ນໄດ້ຖືກຮັບຮອງເອົາ ຢູ່ໃນກອງປະຊຸມສາມັນນິຕິບັນຍັດ ຄັ້ງທີ 6 ສະໄໝທີ 8 ຂອງສະພາແຫ່ງຊາດ ໃນເດືອນ ພະຈິກ 2009.<br>[ໝາກຜົນ 1: ການຝຶກອົບຮົມ ແລະ OJT] ການຝຶກອົບຮົມໃນຫົວຂໍ້ ການຄຸ້ມຄອງ ໂຄງການລົງທຶນລັດ ໃນຂອບເຂດທົ່ວປະເທດ ແມ່ນໄດ້ກວມເອົາ 10 ແຂວງ ແລະ 1 ແຂວງ ນະຄອນຫຼວງ ໃນກາງເດືອນ ມັງກອນ 2010. ໂດຍມີນັກສຳມະນາກອນ 522 ທ່ານ ໃນນັ້ນມີ (12 ທ່ານ ມາຈາກພາກສ່ວນ DPI ແລະ 35 ທ່ານ ມາຈາກຂະແໜງການຂອງພະແນກທີ່ກ່ຽວຂ້ອງໃນແຕ່ລະແຂວງ) ກໍ່ໄດ້ສຳເລັດການຝຶກອົບຮົມເປັນທີ່ຮຽບຮ້ອຍແລ້ວ.<br>[ໝາກຜົນ 2: ງົບປະມານຂອງໂຄງການລົງທຶນລັດ ແລະ ການຄຸ້ມຄອງທາງດ້ານການເງິນ] ການຝຶກອົບຮົມ ຫົວຂໍ້ງົບປະມານຂອງໂຄງການລົງທຶນລັດ ແລະ ການຄຸ້ມຄອງທາງດ້ານການເງິນ ແມ່ນໄດ້ຝຶກໃຫ້ແກ່ ພະນັກງານ ຂອງ ກະຊວງແຜນການ ແລະ ການລົງທຶນລັດ ແລະ ພະນັກງານ ຂອງພະແນກ ແຜນການ ແລະ ການລົງທຶນ ທີ່ມາຈາກແຂວງຕ່າງໆ. ຕາມການສັງເກດ ເຫັນວ່ານັກສຳມະນາກອນ ມີຄວາມເຂົ້າໃຈດີ.<br>[ໝາກຜົນ 4: ວິທີການປັບປຸງ ການຄຸ້ມຄອງ ໂຄງການລົງທຶນຂອງລັດ] ວິທີການຕ່າງໆ ໄດ້ມີການປັບປຸງ ແລະ ພັດທະນາໃໝ່ ໃນການຄຸ້ມຄອງກອງທຶນ ສົມທົບ ODA, ການຄຸ້ມຄອງ ໂຄງການລົງທຶນຂອງລັດ ໃນລະດັບເມືອງ ແລະ ການຄຸ້ມຄອງໂຄງການ ແມ່ນໄດ້ລວມຢູ່ໃນ ຄູ່ມືແລ້ວ. ຫົວຂໍ້ຕ່າງໆແມ່ນໄດ້ນຳສະເໜີຢູ່ໃນການຝຶກອົບຮົມ ການຄຸ້ມຄອງ ໂຄງການລົງທຶນລັດ ທົ່ວປະເທດ, ພ້ອມທັງ ມີການແຈກຢາຍປຶ້ມຄູ່ມືຕ່າງໆ. |
| 3. ຄວາມຄືບໜ້າຕໍ່ໄປ ແມ່ນເພື່ອເຮັດໃຫ້ຈຸດປະສົງຂອງໂຄງການປະສົບຜົນສຳເລັດ |
| ໂຄງການໄດ້ມີການພັດທະນາ ເຄື່ອງມື, ວິທີການ ແລະ ຂັ້ນຕອນມາດຕະຖານຕ່າງໆ ຕາມແຜນທີ່ໄດ້ວາງໄວ້, ແລະ ປັດຈຸບັນນີ້ແມ່ນກຳລັງຢູ່ໃນຂັ້ນຕອນ ການຈັດຝຶກອົບຮົມ ແລະ ຕິດຕາມກວດກາເບິ່ງການນຳໃຊ້ ຂະບວນການ ຄຸ້ມຄອງການລົງທຶນ ໂຄງການຂອງລັດສຳລັບການສະເໜີຂໍງົບປະມານ ໃນສົກປີ 2010/2011. ໃນຂະນະດຽວກັນ ສິ່ງນີ້ກໍ່ແມ່ນຍາກທີ່ຈະເປັນຕົວຕັດສິນໄດ້ວ່າ ຈຸດປະສົງຂອງໂຄງການ ຈະປະສົບຜົນສຳເລັດຫຼືບໍ່. |
| 4. ຜົນກະທົບ |
| ຕາມການສຳຫຼວດໂດຍພື້ນຖານ ສະແດງໃຫ້ເຫັນວ່າ ມັນຍາກທີ່ລວມເອົາຕົວຊີ້ວັດຕ່າງໆ ເຂົ້າໃນເປົ້າໝາຍທີ່ຢູ່ສູງກວ່າ ແລະ ມັນກໍ່ຍາກທີ່ຈະວັດແທກເຖິງຜົນກະທົບຂອງໂຄງການ. ສະນັ້ນ, ປັດຈຸບັນນີ້ ໂຄງການແມ່ນກຳລັງປຶກສາຫາລືກັບ ຝ່າຍລາວ ເພື່ອດັດແປງຕົວຊີ້ວັດຕ່າງໆ ທີ່ຈະສະແດງໃຫ້ເຫັນຢູ່ໃນຕາຕະລາງຕໍ່ໄປ. ແລະ ຄວາມສຳເລັດຂອງເປົ້າໝາຍທັງໝົດ ແມ່ນຍາກທີ່ຈະຕັດສິນໄດ້ຢູ່ໃນຂັ້ນຕອນນີ້. |
| 5. ບັນຫາ ຂໍ້ຄົງຄ້າງຕ່າງໆ |
| ແມ່ນໜຶ່ງໃນການວັດແທກເຖິງຄວາມຍືນຍົງຂອງການຝຶກອົບຮົມຢູ່ໃນ ກະຊວງແຜນການ ແລະ ການລົງທຶນ, ເຊິ່ງກໍ່ໄດ້ເຫັນດີເປັນເອກະພາບທີ່ ກະຊວງແຜນການ ແລະ ການລົງທຶນ ຈະມີສ່ວນກວມເອົາຈຳນວນ 1/3 ຂອງມູນຄ່າທີ່ໄດ້ສະເໜີຂໍ ໃນເວລາຈັດຝຶກອົບຮົມ ກ່ຽວກັບການຄຸ້ມຄອງການລົງທຶນຂອງລັດ ໃນທົ່ວປະເທດ. ກະຊວງແຜນການ ແລະ ການລົງທຶນ ໄດ້ໃຫ້ທຶນສົມທົບ ໃນໂຄງການລົງທຶນລັດ ທີ່ມີຈຳນວນຫຼາຍກວ່າ 321 ລ້ານກີບ, ແຕ່ຢ່າງໃດກໍ່ຕາມ ເນື່ອງຈາກວ່າ ການຂາດແຄນທຶນຮອນ ທີ່ບໍ່ສາມາດ |

ຊຳລະໃນເດືອນ ພະຈິກ ໃຫ້ສຳເລັດໄດ້, ເມື່ອການຝຶກອົບຮົມໄດ້ເລີ້ມຂື້ນ. ບັນຫານີ້ຍັງບໍ່ພຽງແຕ່ເປັນບັນຫາຫຼັກຂອງໂຄງການເທົ່ານັ້ນ ແຕ່ຍັງເປັນບັນຫາ ທີ່ສົ່ງຜົນສະທ້ອນເຖິງ ການຄຸ້ມຄອງ ງົບປະມານປະຈຳປີຂອງໂຄງການລົງທຶນລັດ ແລະ ການແບ່ງສັນປັນສ່ວນໃນຕົວມັນເອງອີກດ້ວຍ. ເຊີ່ງມັນຈຳເປັນຈະຕ້ອງມີການລິເລີ້ມປຶກສາຫາລື ກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ດັ່ງນັ້ນ ຈິ່ງເຮັດໃຫ້ງົບປະມານໂຄງການລົງທຶນລັດ ສາມາດໄດ້ຮັບການຊຳລະ ຕາມເວລາທີ່ຕ້ອງການໄດ້.

## 6. ການທົບທວນຄືນໃນໄລຍະກາງ

ການສຶກສາ ການທົບທວນຄືນໃນໄລຍະກາງ ສຳລັບໂຄງການ ແມ່ນໄດ້ປະຕິບັດ ໃນລະຫວ່າງ ວັນທີ 23 ເດືອນພະຈິກ ຫາ ວັນທີ 8 ເດືອນທັນວາ 2009.

## 7. ສິ່ງທີ່ສຳຄັນ ອື່ນໆ

ໂຄງການໄດ້ມີໂອກາດນຳສະເໜີ ໂຄງຮ່າງ ແລະ ເຄື່ອງມືໃນການປະເມີນໂຄງການ ໃນກອງປະຊຸມຫຼັກສູດ ຂອງ ປະລິນຍາໂທບໍລິຫານທຸລະກິດ ໃນຫົວຂໍ້ "ການຄຸ້ມຄອງໂຄງການ", ຢູ່ທີ່ມະຫາວິທະຍາໄລ ແຫ່ງຊາດລາວ, ໂດຍໄດ້ຮັບການສະໜັບສະໜູນຈາກສູນຊັບພະຍາກອນມະນຸດ ລາວ-ຍີ່ປຸ່ນ.

## 2. ຄວາມຄືບໜ້າຂອງການຈັດຕັ້ງປະຕິບັດໂຄງການ ແລະ ໝາກຜົນຂອງຄວາມສຳເລັດ

ໂຄງການແມ່ນໄດ້ເລີ້ມຕົ້ນໃນປີທີ 3 ແລະ ຂະບວນການຄວາມຄືບໜ້າຕ່າງໆ ແມ່ນໄດ້ດຳເນີນໄປຢ່າງລາບລື້ນ ຕາມແຜນງານທີ່ໄດ້ວາງໄວ້. ຕາຕະລາງຕໍ່ໄປນີ້ ຈະສະແດງໃຫ້ເຫັນເຖິງ ກິດຈະກຳຕ່າງໆ ທີ່ໄດ້ປະຕິບັດ ໃນລະຫວ່າງ 4 ເດືອນຜ່ານມາ ເລີ້ມແຕ່ເດືອນ ຕຸລາ 2009 ຈົນເຖິງ ເດືອນ ມັງກອນ 2010;

<table>
<tr><th colspan="2">ລາຍການ</th><th>ກິດຈະກຳຕ່າງໆ ທີ່ຢູ່ໃນຊ່ວງເຄິ່ງທຳອິດ ຂອງປີທີ 3</th></tr>
<tr><td colspan="2">ກອງປະຊຸມສຳມະນາ ໂຄງການ ໄລຍະກາງ</td><td>ໄດ້ປະຕິບັດ ກອງປະຊຸມສຳມະນາ ໄລຍະກາງຂອງໂຄງການ PCAP2</td></tr>
<tr><td colspan="2">[ໝາກຜົນ 3] ສະໜັບສະໜູນ ການໃຫ້ຄຳປຶກສາ ທາງດ້ານກົດໝາຍ ກ່ຽວກັບການຄຸ້ມຄອງ ການລົງທຶນລັດ</td><td>• ສືບຕໍ່ໃຫ້ຄຳປຶກສາ ໃນການຮ່າງກົດໝາຍວ່າດ້ວຍ ການຄຸ້ມຄອງ ການລົງທຶນລັດ<br>• ການໃຫ້ຄຳປຶກສາ ວ່າດ້ວຍການ ປະກາດໃຊ້ ດຳລັດ /ກົດລະບຽບ ຕ່າງໆ</td></tr>
<tr><td colspan="2">[ໝາກຜົນ 1] ການຝຶກອົບຮົມ ແລະ ການຝຶກວຽກກັບທີ່ (OJT)</td><td>• ການສົນທະນາ ກ່ຽວກັບ ການຈັດຕັ້ງຫົວຂໍ້ຕ່າງໆຂອງການຝຶກອົບຮົມ<br>• ພັດທະນາ ຫຼັກສູດການຝຶກອົບຮົມ<br>• ການຝຶກອົບຮົມການເປັນຄູຝຶກ (TOT)<br>• ການຈັດຕັ້ງປະຕິບັດ ການຝຶກອົບຮົມສຳລັບ ແຂວງຕ່າງໆ ທົ່ວປະເທດ ໃນຫົວຂໍ້ ການຄຸ້ມຄອງການລົງທຶນຂອງລັດ</td></tr>
<tr><td colspan="2">[ໝາກຜົນ 2] ງົບປະມານ ຂອງໂຄງການ ການລົງທຶນລັດ ແລະ ການຄຸ້ມຄອງ ທາງດ້ານການເງິນ</td><td>• ການພັດທະນາ ແຜນງານ ການຝຶກອົບຮົມ, ລັກສູດ ແລະ ຫົວຂໍ້ ຕ່າງໆ<br>• ການຝຶກອົບຮົມການເປັນຄູຝຶກ<br>• ການຝຶກອົບຮົມ ໃຫ້ແກ່ ແຂວງ ແລະ ກະຊວງຕ່າງໆ</td></tr>
<tr><td colspan="3">[ຜົນໄດ້ຮັບ 4] ການປັບປຸງ ວິທີການຄຸ້ມຄອງ ໂຄງການລົງທຶນລັດ</td></tr>
<tr><td></td><td colspan="2">[ໝາກຜົນ4-1] ການຄຸ້ມ ກອງທຶນ ສົມທົບ ODA</td></tr>
<tr><td></td><td colspan="2">[ໝາກຜົນ4-2] ການຄຸ້ມຄອງ ໂຄງການລົງທຶນລັດ ໃນລະດັບເມືອງ</td></tr>
<tr><td></td><td colspan="2">[ໝາກຜົນ4-3] ການຄຸ້ມຄອງ ໂຄງການ</td></tr>
</table>

### 2.1 [ຜົນໄດ້ຮັບ 3] ກິດຈະກຳຕ່າງໆ ກ່ຽວກັບ ການສະໜັບສະໜູນ ການໃຫ້ຄຳປຶກສາ ທາງດ້ານກົດໝາຍຂອງການ ຄຸ້ມຄອງໂຄງການລົງທຶນລັດ

(1) ຄາດໝາຍ ຄວາມສຳເລັດ ຂອງ ໝາກຜົນ 3

ກົດໝາຍວ່າດ້ວຍການລົງທຶນຂອງລັດ ແມ່ນໄດ້ຖືກຮັບຮອງເອົາ ໃນກອງປະຊຸມສາມັນນິຕິບັນຍັດຄັ້ງທີ 6 ສະໄໝທີ 8 ຂອງສະພາແຫ່ງຊາດ ໃນເດືອນພະຈິກ 2009. ກົດໝາຍດັ່ງກ່າວໄດ້ຖືກດັດແປງເປັນຄັ້ງສຸດທ້າຍ ແລະ ໄດ້ປະກາດນຳໃຊ້ພາຍໃນ 90 ວັນ ພາຍຫຼັງທີ່ໄດ້ຮັບຮອງເອົາໂດຍ ສະພາແຫ່ງຊາດ ພາຍໃຕ້ຊື່ຂອງປະທານປະເທດ ຂອງ ສປປລາວ.

[ໝາກຜົນ 3]

ປະສິດທິພາບ ແລະ ປະສິດທິຜົນ ຂອງກອບວຽກທາງດ້ານກົດໝາຍ ຂອງການຄຸ້ມຄອງ ໂຄງການລົງທຶນລັດ ແມ່ນໄດ້ຮັບການພັດທະນາ ແລະ ເຂັ້ມແຂງຂຶ້ນຕື່ມ

[ຕົວຊີ້ວັດ]

1. ກົດໝາຍ ວ່າດ້ວຍ ການຄຸ້ມຄອງ ໂຄງການລົງທຶນລັດ ແລະ ດຳລັດ ທີ່ກ່ຽວຂ້ອງສະເພາະ ແມ່ນໄດ້ຖືກຮ່າງຂຶ້ນ, ໄດ້ຍື່ນ ແລະ ໄດ້ຖືກຮັບຮອງເອົາ ໂດຍ ສະພາແຫ່ງຊາດ.
2. ກົດໝາຍວ່າດ້ວຍການຄຸ້ມຄອງໂຄງການລົງທຶນລັດ ແລະ ດຳລັດທີ່ກ່ຽວຂ້ອງໂດຍສະເພາ ອົງການຈັດຕັ້ງທີ່ມີໜ້າທີ່ຮັບຜິດຊອບ ແລະ ຂັ້ນຕອນຕ່າງໆທາງດ້ານກົດໝາຍ ຂອງ ການທົບທວນຄືນ, ການປ່ຽນແປງ, ການເລື່ອນ ແລະ ການໂຈະໂຄງການ ການລົງທຶນລັດ ລວມທັງໂຄງການ ODA, ການລົງໂທດ ອົງການຈັດຕັ້ງ ແລະ ຜູ້ຮັບເໝົາ ທີ່ກ່ຽວຂ້ອງ.
3. ກົດໝາຍວ່າດ້ວຍການຄຸ້ມຄອງໂຄງການລົງທຶນລັດ ແລະ ດຳລັດທີ່ກ່ຽວຂ້ອງ, ປື້ມຄູ່ມືທີ່ໄດ້ຮັບອານຸຍາດ, ທີ່ໄດ້ພັດທະນາ ແລະ ຍົກລະດັບຢູ່ໃນໂຄງການ ແມ່ນເຄື່ອງມືທີ່ໄດ້ມາດຕະຖານ ແລະ ໄດ້ເຜີຍແຜ່ໄປທົ່ວປະເທດ.

(2) ແຜນການຈັດຕັ້ງ ປະຕິບັດ ໄລຍະກາງ

ຕໍ່ໄປນີ້ຈະແມ່ນ ກິດຈະກຳ ຕ່າງໆ ທີ່ຊີ້ໃຫ້ເຫັນເຖິງການປະຕິບັດ ໃນຊ່ວງລະຫວ່າງເດືອນ ຕຸລາ 2009 ຫາເດືອນ ມັງກອນ 2010.

1) ສືບຕໍ່ໃຫ້ຄຳປຶກສາ ໃນການຮ່າງກົດໝາຍ ວ່າດ້ວຍ ການຄຸ້ມຄອງ ໂຄງການລົງທຶນລັດ

ກົດໝາຍທີ່ໄດ້ຖືກຮ່າງຂຶ້ນ ແມ່ນໄດ້ຍື່ນໃຫ້ແກ່ ຄະນະກຳມະການ ສຶກສາ ກົດໝາຍ ສຳລັບ ສະພາແຫ່ງຊາດເປັນທີ່ຮຽບຮ້ອຍແລ້ວ ໃນເດືອນ ຕຸລາ 2009. ຄະນະກຳມະການ ໄດ້ສົນທະນາ ເຖິງຈຸດທີ່ໄດ້ຮັບການ ແກ້ໄຂ ຈາກ ຮ່າງສະບັບທີ່ຜ່ານມາ, ແລະ ທຳການດັດແກ້ຄັ້ງສຸດທ້າຍ ກ່ອນຂະມີການ ຍື່ນ ຫຼື ສົ່ງ ໃຫ້ແກ່ສະພາ

ແຫ່ງຊາດ ໃນເດືອນ ພະຈິກ 2009.

2) ການໃຫ້ຄຳປຶກສາ ວ່າດ້ວຍ ການປະກາດໃຊ້ ດຳລັດ/ກົດລະບຽບ ຕ່າງໆ

ພາຍຫຼັງທີ່ກົດໝາຍວ່າດ້ວຍ ການລົງທຶນຂອງລັດ ໄດ້ຖືກຮັບຮອງເອົາໂດຍສະພາແຫ່ງຊາດ, ໂຄງຮ່າງຂອງກົດໝາຍກໍ່ໄດ້ຖືກນຳສະເໜີ ໂດຍຜ່ານການສຳມະນາ ໃນໄລຍະກາງຂອງໂຄງການ PCAP2 ໃນຂອບເຂດທົ່ວປະເທດ. ໃນໂອກາດດັ່ງກ່າວນີ້ ກົດໝາຍໃນປັດຈຸບັນ ໄດ້ສະແດງໃຫ້ເຫັນຈຳນວນຂອງພະນັກງານທີ່ກ່ຽວຂ້ອງ ກັບການຄຸ້ມຄອງໂຄງການລົງທຶນຂອງລັດຢ່າງມີປະສິດທິຜົນ.

(3) ຈຸດສຳຄັນ ສຳລັບເຄິ່ງປີຕໍ່ໄປ

ການຕິດຕາມກວດກາ ການປະຕິບັດຕາມລະບຽບກົດໝາຍ ແມ່ນຈະໄດ້ກວດກາໂດຍຜ່ານ ການຝຶກອົບຮົມໜ້າວຽກກັບທີ່ (OJT) ໃນທົ່ວປະເທດ. ໂຄງການຈະໄດ້ໃຫ້ການສະໜັບສະໜູນ ໃນການຮ່າງດຳລັດການຈັດຕັ້ງປະຕິບັດ ແລະ ກົດລະບຽບຕ່າງໆທີ່ຈະເປັນຫົວຂໍ້ສະໜັບສະໜູນໃຫ້ແກ່ກົດໝາຍ. ໂຄງການກໍ່ຕ້ອງໄດ້ແນ່ໃຈເຊັ່ນກັນວ່າ ປື້ມຄູ່ມືທີ່ສ້າງຂື້ນນັ້ນ ແມ່ນມີຄວາມສອດຄ່ອງກັບ ກົດໝາຍອັນໃໝ່.

## 2.2 【ໝາກຜົນ 1】: ກິດຈະກຳຕ່າງໆ ສຳລັບ ການສ້າງຄວາມຮູ້ຄວາມສາມາດ ແລະ ທັກສະຕ່າງໆ (ການຝຶກອົບຮົມ / OJT)

(1) ຄາດໝາຍຄວາມສຳເລັດ ຂອງ ໝາກຜົນ 1

ກິດຈະກຳຕ່າງໆ ທີ່ກ່ຽວຂ້ອງ ຂອງ ໝາກຜົນ 1, "ພະນັກງານຂອງ ພະແນກແຜນການ ແລະ ການລົງທຶນຂອງແຂວງທັງໝົດ ແລະ ພະນັກງານ ພະແນກແຜນການຂອງ ກະຊວງທັງໝົດ ແລະ ອົງການຈັດຕັ້ງຕ່າງ

ທີ່ກ່ຽວຂ້ອງ ແມ່ນໄດ້ບັນລຸ ທັກສະ ແລະ ຄວາມຮູ້ ໂດຍພື້ນຖານ ແລະ ທັງໝົດຂອງ ການຄຸ້ມຄອງ ໂຄງການລົງທຶນລັດ", ໄດ້ມີການດໍາເນີນຢ່າງລາບລື້ນດີ ຕັ້ງແຕ່ຕົ້ນຈົນມາຮອດປັດຈຸບັນ ກໍ່ຄືກາງເດືອນ ມັງກອນ 2010, ພະນັກງານ ຂອງ ພະແນກແຜນການ ແລະ ການລົງທຶນ ຈໍານວນ 522 ທ່ານ ແລະ ເຈົ້າຂອງໂຄງການທັງໝົດ, ຜູ້ທີ່ມາຈາກ 10 ແຂວງ ແລະ ນະຄອນຫຼວງວຽງຈັນ, ໄດ້ຮຽນຮູ້ເອົາພື້ນຖານວິທີການຄຸ້ມຄອງ ໂຄງການລົງທຶນລັດໂດຍຜ່ານ ການຝຶກອົບຮົມ ຫົວຂໍ້ ການຄຸ້ມຄອງໂຄງການ ລົງທຶນຂອງລັດທີ່ໄດ້ຈັດຂຶ້ນໂຄງການ, ແລະ ໂຄງການຈະສືບຕໍ່ ຈັດຕັ້ງປະຕິບັດ ການຝຶກອົບຮົມ ຫົວຂໍ້ ການຄຸ້ມຄອງ ໂຄງການລົງທຶນລັດ ໃນຂອບເຂດທົ່ວປະເທດຕໍ່ໄປ ສ່ວນ 6 ແຂວງ ແລະ ກະຊວງ / ອົງການຈັດຕັ້ງ ເພື່ອໃຫ້ສໍາເລັດຕາມໝາກຜົນທີ່ 1.

(2) ການທົບທວນຄືນ ການຈັດຕັ້ງປະຕິບັດ ໃນໄລຍະກາງ

ກິດຈະກໍາ ທີ່ກ່ຽວຂ້ອງກັບ ຜົນໄດ້ຮັບ 1, ເຊິ່ງໄດ້ຈັດຕັ້ງປະຕິບັດຕັ້ງແຕ່ ເດືອນ ຕຸລາ 2009 ຈົນເຖິງ ເດືອນ ມັງກອນ 2010 ແມ່ນຄືດັ່ງຕໍ່ໄປນີ້.

1) ການປຶກສາຫາລື ກ່ຽວກັບ ການຈັດຕັ້ງ ການຝຶກອົບຮົມ
2) ການພັດທະນາ ຫຼັກສູດ ການຝຶກອົບຮົມ
3) ການຝຶກອອົບຮົມ ການເປັນຄູຝຶກ (TOT)
4) ການຝຶກອົບຮົມໃຫ້ແກ່ ແຂວງ ແລະ ກະຊວງ ຕ່າງໆ

ກະລຸນາ ສັງເກດເບິ່ງ ຂ້າງລົງນີ້ ສໍາລັບກິດຈະກໍາຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນັ້ນ.

1) ການປຶກສາຫາລື ກ່ຽວກັບ ການຈັດຕັ້ງການຝຶກອົບຮົມ

(ຄວາມຄືບໜ້າຂອງການຊຳລະ ຂອງທຶນສົມທົບ ຂອງ MPI ສຳລັບການຝຶກອົບຮົມ)

ອີງຕາມຄວາມໝັ້ນຄົງທາງດ້ານການເງິນ ຂອງການຝຶກອົບຮົມ ການຄຸ້ມຄອງໂຄງການລົງທຶນລັດ, MPI, JICA, ແລະ ໂຄງການໄດ້ເຫັນດີເປັນເອະພາບກັນວ່າ MPI ຈະປະກອບ 1/3 ຂອງ ຄ່າໃຊ້ຈ່າຍການຝຶກອົບຮົມຂອງໂຄງການ ສຳລັບປີນີ້. ໃນປີ 2009 ສະພາແຫ່ງຊາດ ໄດ້ຮັບຮອງເອົາ ເງິນຈຳນວນ 321.34 ລ້ານກີບ ເປັນເງິນສົມທົບທຶນ ໂຄງການລົງທຶນຂອງລັດ ຂອງ MPI ໃຫ້ແກ່ໂຄງການ. ເຖິງຢ່າງໃດກໍ່ຕາມ ຍ້ອນວ່າມີການຊຳລະສະສາງງົບປະມານ ທີ່ຊັກຊ້າ ຈາກກະຊວງການເງິນ, MPI ຈຶ່ງບໍ່ສາມາດຊຳລະງົບປະມານໃຫ້ແກ່ການຝຶກອົບຮົມ[1] ໄດ້. ສະນັ້ນ, MPI, JICA, ແລະ ໂຄງການໄດ້ເຫັນດີເປັນເອກະພາບກັນວ່າ MPI ຈະຈ່າຍວົງເງິນທີ່ໄດ້ສະເໜີ ສຳລັບ ການປະຕິບັດ ການຝຶກອົບຮົມໜ້າວຽກກັບທີ່ (OJT) ແທນ. ໂຄງການຈະສືບຕໍ່ໃຫ້ການຮ່ວມມື ກັບ MPI ເພື່ອເຮັດໃຫ້ການປະຕິບັດ ການຝຶກອົບຮົມໜ້າວຽກກັບທີ່ (OJT) ນັ້ນ ດຳເນີນໄປໄດ້ດ້ວຍດີ ເພື່ອຊອກຫາວິທີຮັກສາຄວາມໝັ້ນຄົງທາງດ້ານການເງິນເອົາໄວ້.

2) ການພັດທະນາ ຫຼັກສູດ ການຝຶກອົບຮົມ

"ການຟື້ນຟູ ແລະ ຍົກລະດັບ" ແມ່ນຫົວຂໍ້ຂອງການຝຶກອົບຮົມ ການຄຸ້ມຄອງ ໂຄງການລົງທຶນລັດ ທີ່ໄດ້ຈັດຂຶ້ນໃນປີນີ້. ຫຼັກສູດການຝຶກອົບຮົມໄດ້ແບ່ງເປັນ 2 ຫົວຂໍ້ດ້ວຍກັນຄື: "ການຝຶກອົບຮົມ ກ່ຽວກັບການຄຸ້ມຄອງໂຄງການລົງທຶນຂອງລັດ" ແລະ "ການຝຶກອົບຮົມ ກ່ຽວກັບການຄຸ້ມຄອງທາງດ້ານການເງິນການລົງທຶນຂອງລັດ"[2]. ສິ່ງໜຶ່ງທີ່ເຫັນວ່າມີຄວາມແຕກຕ່າງຈາກ ການຝຶກອົບຮົມຂອງປີທີ່ຜ່ານມາ ຢ່າງຊັດເຈນ ກໍ່ຄື ໄດ້

---

[1] ໃນເດືອນ ພະຈິກ 2009, ກະຊວງການເງິນໄດ້ອະທິບາຍ ໃຫ້ແກ່ກະຊວງແຜນການ ແລະ ການລົງທຶນວ່າ ການຊຳລະສະສາງແມ່ນຊັກຊ້າ ຍ້ອນງົບປະມານແຫ່ງຊາດບໍ່ພຽງພໍ ສາເຫດມາຈາກ ການຊ່ວຍເຫຼືອເຫດສຸກເສີນ ໄພນ້ຳຖ້ວມໃນປີ 2009.

[2] ເບິ່ງພາກຜົນ 2 ສຳລັບ ການຝຶກອົບຮົມການຄຸ້ມຄອງທາງດ້ານການເງິນ ໂຄງດານລົງທຶນລັດ.

ອີງໃສ່ຫົວຂໍ້ຝຶກອົບຮົມ, 3 ວິທີການຄຸ້ມຄອງໂຄງການລົງທຶນລັດທີ່ມີຢູ່ ແມ່ນໄດ້ຖືກຍົກລະດັບຂື້ນ ແລະ 4 ວິທີການໃໝ່ ແມ່ນໄດ້ລວມເຂົ້າຢູ່ໃນຫົວຂໍ້ຕ່າງໆຂອງການຝຶກອົບຮົມ (ເບິ່ງຢູ່ໃນຕາຕະລາງຂ້າງລຸ່ມ).

**ຕາຕະລາງ 1 ຫຼັກສູດການຝຶກອົບຮົມ ຫົວຂໍ້ ການຄຸ້ມຄອງ ໂຄງການລົງທຶນລັດ ໃນທົ່ວປະເທດ**

| | |
|---|---|
| ຫົວເລື້ອງ | ຟື້ນຟູ ແລະ ຍົກລະດັບ |
| ໝາກຜົນທີ່ຄາດເອົາໄວ້ | ແນະນຳ ວິທີການຄຸ້ມຄອງໂຄງການລົງທຶນລັດ ແບບໃໝ່ ແລະ ປັບປຸງວິທີການອັນເກົ່າທີ່ມີຢູ່ |
| ຕາຕະລາງ | ທ້າຍເດືອນ ພະຈິກ 2009 ຫາ ກາງເດືອນ ກຸມພາ 2010 |
| ເປົ້າໝາຍ | ພະນັກງານ DPI ຂອງທຸກໆແຂວງ ແລະ ພະນັກງານ ພະແນກແຜນການ ຂອງ ທຸກໆ ກະຊວງ ແລະ ອົງການຈັດຕັ້ງອື່ນໆ ທີ່ກ່ຽວຂ້ອງ (ລວມທັງມົດ 737 ທ່ານ)<br>➢ ຕໍ່ແຂວງ / ນະຄອນຫຼວງ, ພະນັກງານ DPI 5-7 ທ່ານ ແລະ 20-30 ເຈົ້າຂອງໂຄງການ<br>➢ ຕໍ່ກະຊວງ/ອົງການຈັດຕັ້ງ ສູນກາງ, 1-2 ທ່ານຈາກພະແນກແຜນການ ແລະ 1-2 ເຈົ້າຂອງໂຄງການ. |
| ໄລຍະເວລາ | ➢ ຝຶກອົບຮົມ 5 ວັນ ຕໍ່1 ແຂວງ/ນະຄອນຫຼວງ ຈັດຢູ່ທີ່ ແຕ່ລະ ແຂວງ / ນະຄອນຫຼວງ<br>➢ ຝຶກອົບຮົມ 5 ວັນ ສຳລັບ ກະຊວງ / ອົງການຈັດຕັ້ງ ທີ່ຢູ່ໃນ ນະຄອນຫຼວງວຽງຈັນທັງໝົດ |
| ຄູຝຶກຈາກ MPI | ➢ MPI-DOE: 11 ທ່ານ<br>➢ MPI-DOP: 1 ທ່ານ<br>➢ MPI-DIC : 2 ທ່ານ<br>* ຄູຝຶກ MPI ໄດ້ແບ່ງ ເປັນ 3 ທີມ. ເຊິ່ງມີ ຄູຝຶກ 3-4 ທ່ານ ຕໍ່ທີມ. |
| ຜູ້ປະສານງານ MPI | ➢ MPI-DOOP: 3 ທ່ານ<br>➢ ຜູ້ປະສານງານ ໂຄງການ (MPI-DOE): 3 ທ່ານ |
| ຫົວຂໍ້ ຫຼັກ | ➢ ໄດ້ແນະນຳ ວິທີການຕ່າງໆ ໃນການຄຸ້ມຄອງ ໂຄງການລົງທຶນລັດ ແບບໃໝ່<br>1. ການຂຽນບົດລາຍງານ ສຳລັບ ການຊຳລະໜີ້ສິນ<br>2. ການຄຸ້ມຄອງ ໂຄງການລົງທຶນລັດ ລະດັບເມືອງ<br>3. ການຄຸ້ມຄອງງົບປະມານ ສົມທົບທຶນ ODA ແຫ່ງຊາດ<br>➢ ຟື້ນຟູ ວິທີການຄຸ້ມຄອງ ໂຄງການລົງທຶນລັດ<br>4. ການຂຽນບົດລາຍງານຄວາມຄືບໜ້າ ສຳລັບໂຄງການສືບຕໍ່<br>5. ການນຳໃຊ້ແບບຟອມ ປະເມີນໂຄງການ SPAS ສຳລັບໂຄງການສືບຕໍ່<br>6. ການຄຸ້ມຄອງ ຂະແໜງການໂຄງການ<br>7. ການປະເມີນຜົນໂຄງການລົງທຶນລັດ ແບບປຽບທຽບ |
| ຂໍ້ມູນອື່ນໆ | ➢ ຄຳຖາມສຳລັບແຕ່ລະຫົວຂໍ້ການຝຶກອົບຮົມ, ບົດທົດສອບການສຳເລັດ ແລະ ການປະເມີນ ການຝຶກອົບຮົມ ແມ່ນໄດ້ປະຕິບັດ ເຊັ່ນກັນ. |

3) ຝຶກອົບຮົມ ການເປັນຄູຝຶກ (TOT)

ໃນເດືອນ ພະຈິກ 2009, ໂຄງການໄດ້ຈັດຝຶກອົບຮົມ TOT ສຳລັບການຝຶກອົບຮົມທີ່ໄດ້ກ່າວມາຂ້າງເທິງນັ້ນ. ເຊິ່ງຜົນທີ່ໄດ້ແມ່ນ ມີ 11ທ່ານ, 1 ທ່ານ, 2 ທ່ານ ທີ່ໄດ້ຮັບການຝຶກອົບຮົມ ໂດຍມາຈາກ MPI-DOE, MPI-DOP, ແລະ MPI-DIC ຕາມລຳດັບ. ບົດຮຽນໜຶ່ງຈາກການຝຶກອົບຮົມ TOT ໃນປີນີ້ ແມ່ນມີຄວາມ

ລະອຽດ ຊັດເຈນສົມຄວນ ເຊິ່ງໃນໄລຍະຍາວກໍ່ແມ່ນມີຄວາມຈຳເປັນສຳລັບ ຄູຝຶກຂອງ ກະຊວງແຜນການ ແລະ ການລົງທຶນ ເພື່ອໃຫ້ເຂົ້າໃຈຢ່າງເລິກເຊິ່ງຕື່ມໃນແຕ່ລະຫົວຂໍ້ຝຶກອົບຮົມ ກ່ອນຈະເຮັດຝຶກອົບຮົມ.

4) ການຝຶກອົບຮົມຕໍ່ໃຫ້ແກ່ ບັນດາແຂວງ ແລະ ກະຊວງຂອງສູນກາງຕ່າງໆ

ການຝຶກອົບຮົມ ໃນຫົວຂໍ້ການຄຸ້ມຄອງໂຄງການລົງທຶນລັດ ໃນທົ່ວປະເທດແມ່ນໄດ້ເລີ້ມຕົ້ນ ຕັ້ງແຕ່ເດືອນ ພະຈິກ 2009 ໂດຍອີງໃສ່ຫຼັກສູດທີ່ໄດ້ກ່າວມາຂ້າງເທິງນັ້ນ. ໃນກາງເດືອນ ມັງກອນ 2010, ມີພະນັກງານ ຂອງ ພະແນກແຜນການ ແລະ ການລົງທຶນ 522 ທ່ານ ແລະ ເຈົ້າຂອງໂຄງການ ຂອງ 10ແຂວງ ແລະ ນະຄອນຫຼວງວຽງຈັນ ແມ່ນໄດ້ຮຽນກ່ຽວກັບວິທີການພື້ນຖານ ແລະ ການຄຸ້ມຄອງໂຄງການລົງທຶນທັງໝົດ (ເບິ່ງຢູ່ໃນ ຕາຕະລາງ 2) . ອີງຕາມຜົນທີ່ໄດ້ຮັບຈາກການປະເມີນການຝຶກອົບຮົມ ຂອງສຳມະນາກອນຕ່າງໆ, ເຫັນວ່າມີລະດັບຄວາມພໍໃຈກັບການຝຶກອົບຮົມ ແລະ ຫົວຂໍ້ຕ່າງໆ ເປັນຢ່າງດີ. ແຕ່ເຖິງຢ່າງໃດກໍ່ຕາມກໍ່ຍັງມີບາງບັນຫາທີ່ພົບເຫັນຢູ່ໃນການຝຶກອົບຮົມ ບໍ່ວ່າຈະເປັນ ການຈັດສັນເວລາ, ລະດັບຄວາມເຂົ້າໃຈຂອງຄູຝຶກ ແລະ ທັກສະໃນການອຳນວຍຄວາມສະດວກຕ່າງໆ ແມ່ນໄດ້ສະແດງໃຫ້ເຫັນວ່າ ຍັງມີຄວາມຈຳຕ້ອງໄດ້ມີການປັບປຸງຕື່ມ[3].

**ຕາຕະລາງ 2 ຕາຕະລາງການຝຶກອົບຮົມ ຫົວຂໍ້ການຄຸ້ມຄອງໂຄງການລົງທຶນລັດ ໃນທົ່ວປະເທດ**

| ຊ່ວງເວລາ | ວັນທ ຝຶກອົບຮົມ | ທີມ 1 MPI | ທີມ 2 MPI | ທີມ 3 MPI |
|---|---|---|---|---|
| ຊ່ວງທີ 1 | 09/11/30-12/04 | ຊຽງຂວາງ | ຫົວພັນ | — |
| ຊ່ວງທີ 2 | 09/12/21-12/25 | ບໍລິຄຳໄຊ | ນະຄອນຫຼວງວຽງຈັນ | ແຂວງວຽງຈັນ |
| ຊ່ວງທີ 3 | 10/01/04-01/08 | ອຸດົມໄຊ | ຫຼວງນ້ຳທາ | ໄຊຍະບູລີ |
| | 10/01/11-01/15 | ຜົ້ງສາລີ | ບໍ່ແກ້ວ | ຫຼວງພະບາງ |
| ຊ່ວງທີ 4 | 10/01/25-01/29 | ອັດຕະປື | ສາລະວັນ | ສະຫວັນນະເຂດ |
| | 10/02/01-02/05 | ເຊກອງ | ຈຳປາສັກ | ຄຳມ່ວນ |
| | 10/02/08-02/12 | ທັງໝົດ 42 ກະຊວງທີ່ຢູ່ໃນສູນກາງ / ອົງການຈັດຕັ້ງຕ່າງໆ. | | |

[3] ເບິ່ງໃນເອກະສານຊ້ອນທ້າຍ 1 "ບົດລາຍງານການຝຶກອົບຮົມ ກ່ຽວກັບການຄຸ້ມຄອງໂຄງການລົງທຶນລັດທົ່ວປະເທດ ແລະ ການສຳມະນາ ໄລຍະກາງຂອງໂຄງການ PCAP2 ໃນສົກປີ 2009/2010 (ຊ່ວງທີ 1 ແລະ 2) ສຳລັບລາຍລະອຽດຕ່າງໆ.

(3) ຈຸດທີ່ສຳຄັນ ສຳລັບເຄິ່ງສົກປີຕໍ່ໄປ

5 ກິດຈະກຳ ຕໍ່ໄປນີ້ ແມ່ນຈະໄດ້ຖືກຈັດຕັ້ງປະຕິບັດໃນເຄິ່ງປີຕໍ່ໄປ. ແຕ່ຈຸດທີ່ສຳຄັນຕົ້ນຕໍ ແມ່ນການສ້າງງົບປະມານປະຈຳປີ ຕົວຈິງຂອງໂຄງການລົງທຶນລັດ ຢູ່ໃນ ກະຊວງແຜນການ ແລະ ການລົງທຶນ, ບັນດາແຂວງ ແລະ ກະຊວງໃນສູນກາງ/ອົງການຈັດຕັ້ງຕ່າງໆ ແມ່ນຈະໄດ້ຮັບການສະໜັບສະໜູນໂດຍຜ່ານ ຂໍ້ (1) ການປະຕິບັດ OJT, ແລະ ການປະຕິບັດໜ້າວຽກລະອຽດຕື່ມ ແລະ ການຝຶກອົບຮົມ TOT ໄລຍະຍາວແມ່ນຄວນມີການຝຶກອົບຮົມໃຫ້ແກ່ ຄູຝຶກຂອງ MPI ເພື່ອໃຫ້ມີຄວາມເຂົ້າໃຈເລິກເຊິ່ງຕື່ມອີກໃນແຕ່ລະ ຫົວຂໍ້ ແລະ ທັກສາຕ່າງໆຂອງການອຳນວຍຄວາມສະດວກ ໃນຖານະທີ່ເປັນຄູຝຶກ.

| |
|---|
| 【ໝາກຜົນ 1】 ກິດຈະກຳຕ່າງໆ ໃນເຄິ່ງປີຕໍ່ໄປ |
| (1) ການຝຶກໜ້າວຽກ (OJT) ໃຫ້ແກ່ MPI, ບັນດາແຂວງ ແລະ ກະຊວງຕ່າງໆ |
| (2) ການປະເມີນການຝຶກອົບຮົມ ແລະ ການປະເມີນຜົນຂອງການປະເມີນ |
| (3) ການໃຫ້ຄຳເຫັນ ກັບຄືນ ສຳລັບຜົນຂອງການປະຕິບັດ OJT |
| (4) ການພັດທະນາ ຫຼັກສູດການຝຶກອົບຮົມ |
| (5) ການຝຶກອົບຮົມ TOT |

## 2.3 [ໝາກຜົນ 2] ກິດຈະກຳຕ່າງໆ ສຳລັບການຄຸ້ມຄອງທາງດ້ານການເງິນ ແລະ ງົບປະມານຂອງໂຄງການລົງທຶນຂອງລັດ

(1) ຄາດໝາຍ ຜົນສຳເລັດຂອງ ໝາກຜົນ 2

ການຝຶກອົບຮົມ ການຄຸ້ມຄອງທາງດ້ານການເງິນ ຂອງໂຄງການລົງທຶນລັດ ແມ່ນໄດ້ຈັດຝຶກອົບຮົມໃຫ້ແກ່ພະແນກແຜນການ ແລະ ການລົງທຶນ ຂອງທຸກໆແຂວງ ໃນເດືອນ ມັງກອນ 2010. ສຳມະນາກອນມີຄວາມເຂົ້າໃຈກ່ຽວກັບເນື້ອໃນລາຍລະອຽດຂອງຫົວຂໍ້ການຄຸ້ມຄອງທາງດ້ານການເງິນ. ສະນັ້ນ, ສາມາດເວົ້າໄດ້ວ່າ ມັນມີຄວາມເປັນໄປໄດ້ທີ່ຈະສຳເລັດຕາມເປົ້າໝາຍໄດ້ສູງສຳລັບ "ການນຳສະເໜີ ການຄຸ້ມຄອງທາງ

ດ້ານການເງິນ ແລະ ງົບປະມານຂອງໂຄງການລົງທຶນລັດ”.

ເພື່ອເປັນການຈັດຕັ້ງ ວິທີການຄຸ້ມຄອງທາງດ້ານການເງິນ ຂອງໂຄງການລົງທຶນລັດ, ດັ່ງນັ້ນມັນມີຄວາມສຳຄັນທີ່ ວິທີການເຫຼົ່ານີ້ ຈະຕ້ອງໄດ້ຖືກນຳໃຊ້ ເຂົ້າໃນຂະບວນການສ້າງແຜນງົບປະມານ ຂອງໂຄງການລົງທຶນລັດ ຢູ່ໃນ ກະຊວງແຜນການ ແລະ ການລົງທຶນ ແລະ ບັນດາແຂວງຕ່າງໆ. ທີມງານ ຂອງໂຄງການ PCAP2 ກຳລັງວາງແຜນ ເພື່ອປະຕິບັດວຽກງານການຕິດຕາມໜ້າວຽກຕ່າງໆ, ລວມທັງການຝຶກອົບຮົມ ແລະ ການນຳສະເໜີເພີ້ມເຕີມ ເພື່ອໃຫ້ໄດ້ເຄື່ອງມື ໃນການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ ເພື່ອກ້າວໄປເຖິງການຍອມຮັບ ໂດຍກະຊວງແຜນການ ແລະ ການລົງທຶນ ແລະ ບັນດາແຂວງຕ່າງໆ.

ອົງປະກອບຂອງການຝຶກອົບຮົມ ກ່ຽວກັບ ການຄຸ້ມຄອງ “ງົບປະມານ” ຂອງໂຄງການລົງທຶນຂອງລັດແມ່ນບໍ່ໄດ້ລວມຢູ່ນຳໃນປັດຈຸບັນ, ໃນຂະນະທີ່ການຊີ້ນຳທາງດ້ານງົບປະມານຂອງໂຄງການລົງທຶນລັດສຳລັບ ປີ 2010-11 ຍັງບໍ່ທັນໄດ້ສ້າງຂື້ນໃນເດືອນທັນວາ.

(2) ການທົບທວນ ການຈັດຕັ້ງປະຕິບັດໃນໄລຍະກາງ

ກິດຈະກຳຕ່າງໆທີ່ໄດ້ປະຕິບັດ ເພື່ອໃຫ້ສຳເລັດຕາມເປົ້າໝາຍນີ້ ແມ່ນມີດັ່ງຕໍ່ໄປນີ້;

1) ການພັດທະນາ ແຜນງານ, ຫຼັກສູດ ແລະ ເຄື່ອງມືຕ່າງໆຂອງການຝຶກອົບຮົມ

ແຜນງານການຝຶກອົບຮົມກ່ຽວກັບການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ ສຳລັບບັນດາແຂວງມີດັ່ງຕໍ່ໄປນີ້.

- ການຝຶກອົບຮົມແມ່ນຈະໄດ້ຈັດຂຶ້ນ 3 ຄັ້ງ, ຄືສໍາລັບພາກເໜືອ, ພາກໃຕ້ ແລະ ສູນກາງ. ເຊິ່ງມີຄວາມຄາດຫວັງວ່າ ບັນດາແຂວງຕ່າງໆ ຈະມີການແລກປ່ຽນປະສົບຂອງພວກເຂົາ ກ່ຽວກັບການຄຸ້ມຄອງທາງດ້ານການເງິນ ຂອງໂຄງການລົງທຶນຂອງລັດ ກັບບັນດາແຂວງເພື່ອນບ້ານ ຂອງພວກເຂົາ ຫຼັງຈາກການຝຶກອົບຮົມ.
- ເພື່ອໃຫ້ການຝຶກອົບຮົມໄດ້ປະສິດທິຜົນ ດັ່ງນັ້ນການຝຶກອົບຮົມແມ່ນໄດ້ຈັດຂື້ນທີ່ນະຄອນຫຼວງວຽງຈັນ, ບໍ່ແມ່ນຢູ່ແຂວງ.
- ໄລຍະການຝຶກອົບຮົມ ແມ່ນ 2 ວັນ. ມື້ທໍາອິດແມ່ນການຮຽນຮູ້ກ່ຽວກັບ ແນວຄວາມຄິດຂອງການຄຸ້ມຄອງທາງດ້ານການເງິນ ແລະ ມື້ທີສອງ ແມ່ນຮຽນຮູ້ກ່ຽວກັບ ວິທີການຄຸ້ມຄອງທາງດ້ານການເງິນ. ຫຼັງຈາກນັ້ນ, ຜູ້ເຂົ້າຮ່ວມທັງໝົດ ຈະຕ້ອງໄດ້ມີການສົນທະນາ ກ່ຽວກັບກໍລະນີສຶກສາ ໃນເຄິ່ງສຸດທ້າຍຂອງວັນທີ 2.

<table>
<tr><td rowspan="2">ມື້ທີ 1</td><td>ເຊົ້າ</td><td>ພາບລວມຂອງການຄຸ້ມຄອງທາງດ້ານການເງິນ<br>➢ ບົດຝຶກຫັດ 1: ການຄິດໄລ່ ໄລຍະເວລາໃນການຊໍາລະ<br>➢ ບົດຝຶກຫັດ 2: ການຄິດໄລ່ ໄລຍະເວລາໃນການຊໍາລະຂອງແຕ່ລະແຂວງ</td></tr>
<tr><td>ສວຍ</td><td rowspan="2">ການວິເຄາະທາງດ້ານການເງິນລະດັບແຂວງ ແລະ ການວາງແຜນງົບປະມານໂດຍ ພະແນກແຜນການ ແລະ ການລົງທຶນ<br>➢ ບົດຝຶກຫັດ 3: ການຕັ້ງເປົ້າໝາຍຂອງວົງເງິນທີ່ຕ້ອງໄດ້ຊໍາລະໃນອານາຄົດຂອງແຂວງຕ່າງໆ<br>➢ ບົດຝຶກຫັດ 4: ການວິເຄາະສ່ວນເກີນຂອງວົງເງິນທີ່ຕ້ອງໄດ້ຊໍາລະໃນອານາຄົດ<br>➢ ບົດຝຶກຫັດ 5: ການສ້າງແຜນຄາດຄະເນລາຍຈ່າຍໄລຍະກາງຂອງໂຄງການລົງທຶນລັດ</td></tr>
<tr><td rowspan="2">ມື້ທີ 2</td><td>ເຊົ້າ</td></tr>
<tr><td>ສວຍ</td><td>ກອງປະຊຸມ:<br>ເມື່ອວົງເງິນທີ່ຕ້ອງໄດ້ຊໍາລະໃນອານາຄົດໄດ້ອີງໃສ່ການສະເໜີຂໍຈາກຂະແໜງການຕ່າງໆ ຂອງພະແນກ ແມ່ນຫຼາຍກວ່າຄວາມສາມາດຂອງງົບປະມານ ຂອງ PIP<br>- ພະແນກແຜນການ ແລະ ການລົງທຶນຈະມີການຕິດຕໍ່ພົວພັນກັບຂະແໜງການຕ່າງໆ ແນວໃດ,<br>- ຈະລາຍງານໃຫ້ແກ່ທ່ານເຈົ້າແຂວງແນວໃດ?</td></tr>
</table>

ການພັດທະນາຫຼັກສູດ ແລະ ຫົວຂໍ້ຕ່າງໆ ຂອງການຝຶກອົບຮົມ ຄືດັ່ງຕໍ່ໄປນີ້;

ກ) ພາບລວມຂອງວິທີການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ

ຂ) ການວິເຄາະທາງດ້ານການເງິນໂຄງການລົງທຶນລັດ ລະດັບແຂວງ ແລະ ການວາງແຜນງົບປະມານ ໂດຍ MPI

ຄ) ການວິເຄາະທາງດ້ານການເງິນໂຄງການລົງທຶນລັດ ລະດັບແຂວງ ແລະ ການວາງແຜນງົບປະມານ ໂດຍ DPI

ຫຼັກສູດຕ່າງໆ ສໍາລັບການຝຶກອົບຮົມພາກແຂວງ ແມ່ນຂໍ້ ກ) ແລະ ຄ) ໃນຂະນະທີ່ຫົວຂໍ້ສໍາລັບ ກະຊວງແຜນການ ແລະ ການລົງທຶນ ແມ່ນຂໍ້ ກ) ແລະ ຂ).

ການຝຶກອົບຮົມກ່ຽວກັບການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ, ແມ່ນໄດ້ສຸມໃສ່ຈຸດສໍາຄັນຄື ໄລຍະເວລາຂອງການຊໍາລະ, ເຊິ່ງມັນຈະສະແດງໃຫ້ເຫັນວ່າ ຈະໃຊ້ເວລາຈັກປີ ທີ່ແຂວງຈະສາມາດສໍາເລັດການຊໍາລະສະສາງໃຫ້ແກ່ໂຄງການ, ການອະທິບາຍກ່ຽວກັບການຄຸ້ມຄອງໄລຍະເວລາຂອງການຊໍາລະ, ການຕັ້ງເປົ້າໝາຍຂອງວົງເງິນທີ່ຕ້ອງໄດ້ຊໍາລະໃນອານາຄົດ, ການເຈລະຈາກັບຂະແໜງການຕ່າງໆ. ຢູ່ໃນການຝຶກອົບຮົມ, ນັກສໍາມະນາກອນໄດ້ເຮັດ 5 ບົດຝຶກຫັດ ດັ່ງນັ້ນພວກເຂົາຈະສາມາດປັບປຸງທັກສະໃນການວິເຄາະຂອງພວກເຂົາໃຫ້ດີຂຶ້ນໄດ້.

2) ຝຶກອົບຮົມການເປັນຄູຝຶກ

ການຝຶກອົບຮົມການເປັນຄູຝຶກ (TOT) ແມ່ນໄດ້ຝຶກໃຫ້ພະນັກງານ 7 ທ່ານ ຈາກພະແນກແຜນການ ຂອງກະຊວງແຜນການ ແລະ ການລົງທຶນ ໃນເດືອນມັງກອນ 2010. ຄູຝຶກແມ່ນໄດ້ອໍານວຍຄວາມສະດວກໃຫ້ແກ່ກອງປະຊຸມ. ແລະ ກໍ່ໄດ້ໃຫ້ການສະໜັບສະໜູນຊ່ວຍເຫຼືອ ນັກສໍາມະນາກອນໃນການເຮັດບົດຝຶກຫັດ

ຕ່າງໆເຊັ່ນກັນ.

3) ການຝຶກອົບຮົມໃຫ້ແກ່ບັນດາແຂວງ ແລະ ກະຊວງຕ່າງໆ

ການຝຶກອົບຮົມ ກ່ຽວກັບ ການຄຸ້ມຄອງທາງດ້ານການເງິນຂອງ ໂຄງການລົງທຶນຂອງລັດ ແມ່ນໄດ້ຈັດຂື້ນ ໃນເດືອນ ມັງກອນ 2010ຢູ່ທີ່ນະຄອນຫຼວງວຽງຈັນ, ຄືດັ່ງຕໍ່ໄປນີ້;

- ວັນທີ 14-15 ມັງກອນ 2010: ຝຶກອອົບຮົມໃຫ້ແກ່ບັນດາແຂວງພາກກາງ
- ວັນທີ 19-20 ມັງກອນ 2010: ຝຶກອອົບຮົມໃຫ້ແກ່ບັນດາແຂວງພາກໃຕ້
- ວັນທີ 21-22 ມັງກອນ 2010: ຝຶກອອົບຮົມໃຫ້ແກ່ບັນດາແຂວງພາກເໜືອ
- ວັນທີ 26-27 ມັງກອນ 2010: ຝຶກອອົບຮົມໃຫ້ແກ່ ກະຊວງແຜນການ ແລະ ການລົງທຶນ

ຈຳນວນຂອງນັກສຳມະນາກອນ ມີດັ່ງຕໍ່ໄປນີ້;

- ບັນດາແຂວງພາກກາງ: 20
- ບັນດາແຂວງພາກໃຕ້: 22
- ບັນດາແຂວງພາກເໜືອ: 28
- ກະຊວງແຜນການ ແລະ ການລົງທຶນ: 11

(3) ຈຸດສຳຄັນສຳລັບເຄິ່ງປີຕໍ່ໄປ

1 ) ການປັບປຸງການສ້າງງົບປະມານຂອງ ໂຄງການລົງທຶນຂອງລັດ, ການຕິດຕາມກວດກາ ເຄື່ອງມື ຕ່າງໆຂອງການຄຸ້ມຄອງທາງດ້ານການເງິນຂອງ ໂຄງການລົງທຶນຂອງລັດ, ການດັດແກ້ປື້ມຄູ່ມືຕ່າງໆ

ຫົວຂໍ້ຕ່າງໆ ຂອງການຝຶກອົບຮົມກ່ຽວກັບ ການຄຸ້ມຄອງງົບປະມານຂອງໂຄງການລົງທຶນລັດ ແມ່ນຈະຕ້ອງໄດ້ມີການພິຈາລະນາຄືນໃໝ່ ພາຍຫຼັງທີ່ໄດ້ມີການປະກາດແຈ້ງການກ່ຽວກັບ ບົດແນະນຳແຜນງົບປະມານຂອງໂຄງການລົງທຶນຂອງລັດ ສຳລັບສົກປີ 2010-11 ໃນເດືອນກຸມພາ 2010 ນີ້. ໂຄງການຈະໄດ້ໃຫ້ຄຳຄິດຄຳເຫັນ ກ່ຽວກັບ ຫົວຂໍ້ຕ່າງໆຂອງບົດແນະນຳ ແລະ ເວລາຂອງການປະກາດແຈ້ງການ.

ໃນເດືອນກຸມພາ 2010, ພະນັກງານຈາກພະແນກແຜນການ ຂອງກະຊວງແຜນການ ແລະ ການລົງທຶນໄດ້ວາງແຜນເພື່ອເຂົ້າຮ່ວມ ການຝຶກໜ້າວຽກກັບທີ່ (OJT), ເພື່ອຕິດຕາມຜົນຂອງການຝຶກອົບຮົມ ກ່ຽວກັບການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ. ໃນເດືອນມີນາ ທີມງານຂອງໂຄງການ PCAP2 ໄດ້ວາງແຜນເພື່ອປະຕິບັດການຝຶກອົບຮົມເພີ້ມເຕີມໃຫ້ແກ່ ກະຊວງແຜນການ ແລະ ການລົງທຶນ ເພື່ອຊ່ວຍໃຫ້ເຂົາເຈົ້າມີຄວາມເຂົ້າໃຈເລິກເຊິ່ງຕື່ມອີກ. ທີມງານຂອງໂຄງການ PCAP2 ຍັງໄດ້ວາງແຜນເພື່ອໄປຢ້ຽມຢາມບັນດາແຂວງຕ່າງໆ ຕົວແບບ ເພື່ອກວດສອບເບິ່ງ ບັນຫາຕ່າງໆ ຂອງເຄື່ອງມື ການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ.

ໃນເດືອນພຶດສະພາ ແລະ ເດືອນ ມິຖຸນາ, ປື້ມຄູ່ມືທີ່ກ່ຽວກັບການຄຸ້ມຄອງທາງດ້ານການເງິນຂອງໂຄງການລົງທຶນລັດ ຈະໄດ້ມີການດັດແກ້ ແລະ ສົ່ງໃຫ້ແກ່ ກະຊວງແຜນການ ແລະ ການລົງທຶນ ເພື່ອກວດຄືນ.

### 2.4 [ໝາກຜົນ 4] ກິດຈະກຳຕ່າງໆ ເພື່ອປັບປຸງວິທີການຄຸ້ມຄອງ ໂຄງການລົງທຶນຂອງລັດ

#### 2.4.1 [ໝາກຜົນ 4-1] ການຄຸ້ມຄອງກອງທຶນສົມທົບ ODA

(1) ຄາດໝາຍຜົນສຳເລັດຂອງ ໜາກຜົນ 4 -1

ດັ່ງທີ່ໄດ້ກ່າວຢູ່ໃນຕາຕະລາງຂ້າງລຸ່ມນີ້, ຕົວຊີ້ວັດ 4 -1 ແລະ 4 – 3 ແມ່ນດຳເນີນໄປໄດ້ດີສຳລັບຕາຕະລາງຜົນສຳເລັດ ໃນທ້າຍໂຄງການ. ປື້ມຄູ່ມືຕ່າງໆແມ່ນລວມມີອົງປະກອບຍ່ອຍອັນໃໝ່ຢູ່ນຳ, ການຄຸ້ມຄອງກອງທຶນ ODA ແມ່ນໄດ້ຮັບການປັບປຸງ, ຫຼັງຈາກນັ້ນ ປື້ມຄູ່ມືໄດ້ຖືກແຈກຢາຍ ໃຫ້ແກ່ພາກສ່ວນທີ່ກ່ຽວຂ້ອງ ໃນເວລາທີ່ໂຄງການໄດ້ຈັດຕັ້ງປະຕິບັດ ຫຼັກສູດການຝຶກອົບຮົມ ຕັ້ງແຕ່ເດືອນ ທັນວາ 2009 ຫາ ເດືອນກຸມພາ 2010. ມີຈຳນວນພະນັກງານທີ່ຫຼາຍກວ່າແຜນວາງໄວ້ ຢູ່ໃນຕົວຊີ້ວັດ 4 -1 ເຊິ່ງໄດ້ວາງແຜນໄວ້ເພື່ອເຂົ້າຮ່ວມການຝຶກອົບຮົມ ຕາມອົງປະກອບຍ່ອຍນີ້. ຈຳນວນຂອງຄູຝຶກ ຈາກແຕ່ລະພະແນກ ຂອງ ກະຊວງແຜນການ ແລະ ການລົງທຶນ ແມ່ນໄດ້ວາງແຜນໄວ້ ເພື່ອໃຫ້ໄດ້ຮັບການພັດທະນາຕາມອົງປະກອບຍ່ອຍຄືດັ່ງຕໍ່ໄປນີ້: 2 ທ່ານ ຈາກກົມຮ່ວມມືສາກົນ, 3 ທ່ານ ຈາກກົມປະເມີນຜົນ, 1 ທ່ານຈາກກົມແຜນການ.

<u>ຕາຕະລາງຜົນສຳເລັດ ຂອງໜາກຜົນ 4-1</u>

| ຕົວຊີ້ວັດ | ຜົນສຳເລັດ |
|---|---|
| 4-1 "ປື້ມຄູ່ມືສຳລັບການຄຸ້ມຄອງໂຄງການລົງທຶນລັດ" ແມ່ນໄດ້ຮັບການປັບປຸງ ຫຼື ໄດ້ພັດທະນາ,ເຊິ່ງໃນນັ້ນ ກໍ່ໄດ້ກວມເອົາ ການຄຸ້ມຄອງກອງທຶນສົມທົບ ODA ແລະ ການຄຸ້ມຄອງໂຄງການລົງທຶນຂອງລັດໃນລະດັບເມືອງ. ເອກະສານ ແລະ ຄູ່ມື ກໍ່ໄດ້ຮັບຮອງເອົາ ແລະ ແຈກຢາຍໃຫ້ແກ່ພະນັກງານລັດທັງໝົດທີ່ກ່ຽວຂ້ອງ. | 1) ການດຳເນີນວຽກງານຂອງ ໃບເກັບກຳຂໍ້ມູນໂຄງການແບບກະທັດຮັດ (SPIS), ແບບຟອມ (SPIS) ແລະ ການປະເມີນຜົນແບບປຽບທຽບ ແມ່ນໄດ້ມີການແກ້ໄຂ ການດຳເນີນງານ, ເຊິ່ງມັນເປັນບັນຫາທີ່ສົ່ງຜົນສະທ້ອນເຖິງ ການຄຸ້ມຄອງກອງທຶນສົມທົບ ODA ທີ່ໄດ້ຮັບການປັບປຸງ ແລະ ໄດ້ສະເໜີໃຫ້ແກ່ ກົມຮ່ວມມືສາກົນ, ກະຊວງແຜນການ ແລະ ການລົງທຶນ.<br>2) ປື້ມຄູ່ມື ໄດ້ຖືກແກ້ໄຂ ແຕ່ປື້ມແນະນຳຍັງບໍ່ໄດ້ພິມອອກ, ເພາະວ່າການຄຸ້ມຄອງໂຄງການລົງທຶນລັດ ແມ່ນຈຳເປັນຕ້ອງມີ ການປະສານງານກັບ ບັນດາ ກະຊວງ ແລະ ຜູ້ໃຫ້ທຶນຕ່າງໆ.<br>3) ປື້ມຄູ່ມືໄດ້ແຈກຢາຍໃຫ້ແກ່ ພະນັກງານລັດທີ່ກ່ຽວຂ້ອງທີ່ໄດ້ເຂົ້າຮ່ວມຫຼັກສູດຝຶກອົບຮົມ ຕັ້ງແຕ່ ເດືອນທັນວາ 2009 ຫາ ເດືອນ ກຸມພາ 2010.<br>4) ເຄື່ອມືການຝຶກອົບຮົມ ຂອງຫົວຂໍ້ທີ່ກ່ຽວຂ້ອງກັບ ການຄຸ້ມຄອງ ກອງທຶນສົມທົບ ODA ແມ່ນໄດ້ຖືກພັດທະນາ. |
| 4-3 ມີພະນັກງານ MPI ຫຼາຍກວ່າ 20 ທ່ານ ແລະ ແລະ ພະນັກງານແຜນການຫຼາຍກວ່າ 5 ທ່ານໃນແຕ່ລະແຂວງ, ກະຊວງ ແລະ ອົງການຈັດຕັ້ງຂອງລັດ ອື່ນໆ ທີ່ກ່ຽວຂ້ອງແມ່ນສາມາດຄຸ້ມຄອງໂຄງການ PIP ໄດ້ທັງສອງ ໂດຍທີ່ສອດຄອງກັບປື້ມຄູ່ມື ທີ່ໄດ້ມີການປັບປຸງ ແລະ ຍົກລະດັບໃໝ່ ແລະ ການຝຶກອົມຮົມໃຫ້ແກ່ພະນັກງານຂອງແຂວງ ແລະ ເມືອງ ທີ່ກ່ຽວຂ້ອງ. | 1) ໃນຕອນທ້າຍເດືອນ ມັງກອນ 2010, ການຝຶກອົບຮົມແມ່ນໄດ້ທຳການຈັດຕັ້ງປະຕິບັດ. ຈຳນວນຂອງພະນັກງານ ຜູ້ທີ່ໄດ້ຮັບການຮັບການຝຶກອົບຮົມຢູ່ໃນຫຼັກສູດຝຶກອົບຮົມແມ່ນຢູ່ໃນຕາຕະລາງລຸ່ມນີ້.<br>2) ປື້ມຄູ່ມື ແລະ ເຄື່ອງມືໃນການຝຶກອົບຮົມ ແມ່ນໄດ້ຮັບການປັບປຸງຕາມອົງປະກອບຍ່ອຍນີ້.<br>3) ຄວາມສາມາດຈະຖືກ ປະເມີນໂດຍ ການປະເມີນຜົນ ຂອງການປະເມີນ ນັ້ນແມ່ນຕາຕະລາງແຜນຈັດຕັ້ງປະຕິບັດໃນກາງປີ 2010. |

| ອົງການຈັດຕັ້ງທີ່ຢູ່ໃນແຜນ | ຈຳນວນຂອງພະນັກງານທີ່ໄດ້ຮັບການຝຶກອົບຮົມ |
|---|---|
| MPI | ປະມານ 14 ທ່ານ (ຈະຖືກຝຶກໂດຍການຝຶກ TOT) |
| DPI | ປະມານ 105 - 180 ທ່ານ (ຍົກເວັ້ນແຂວງ ຊຽງຂວາງ ແລະ ຫົວພັນ) |
| ເຈົ້າຂອງໂຄງການ | ປະມານ 450 - 525 ທ່ານ (ຍົກເວັ້ນແຂວງ ຊຽງຂວາງ ແລະ ຫົວພັນ) |
| ອົງການຈັດຕັ້ງອື່ນໆຂອງລັດທີ່ກ່ຽວຂ້ອງ | ປະມານ 108 ທ່ານ |
| ລວມທັງໝົດ | ປະມານ 677 - 827 ທ່ານ |

(2) ການທົບທວນຄືນການຈັດຕັ້ງປະຕິບັດ ໃນໄລຍະກາງ

ກິດຈະກຳຕ່າງໆ ທີ່ຕ້ອງສຳເລັດ ຂອງໝາກຜົນ 4-1, ຄວາມເຂັ້ມແຂງຂອງການຄຸ້ມຄອງກອງທຶນ ສົມທົບ ODA ແມ່ນດຳເນີນໄປໄດ້ດີ. ການບັນທຶກກິດຈະກຳຕ່າງໆ ແມ່ນໄດ້ສັງລວມຢູ່ໃນຕາຕະລາງດັ່ງຕໍ່ໄປນີ້.

<u>ບັນທຶກ ກິດຈະກຳຕ່າງໆ ເພື່ອໃຫ້ສຳເລັດ ຂອງໝາກຜົນ 4-1</u>

| ກິດຈະກຳຕ່າງໆ | ການບັນທຶກ |
|---|---|
| 1 ສຶກສາຂະບວນການຄຸ້ມຄອງ ທຶນສົມທົບ ODA , ການຄຸ້ມຄອງໂຄງການລົງທຶນຂອງລັດ ໃນລະດັບເມືອງ ແລະ ການຄຸ້ມຄອງແຜນງານຂອງຂະແໜງການ | 1) ການປະສານງານກັບພະແນກທີ່ກ່ຽວຂ້ອງ ເພື່ອເລີ່ມຕົ້ນກິດຈະກຳ ແລະ ການສຶກສາເບື້ອງຕົ້ນ ແມ່ນໄດ້ປະສົບຜົນສຳເລັດ ສຳລັບການສຳຫຼວດ ໂຄງການ ສົມທົບທຶນ ODA.<br>2) ຄວາມຮັບຜິດຊອບຂອງ MPI, ຄວາມຮັບຜິດຊອບຂອງDPI, ຂະບວນການສ້າງແຜນງົບປະມານ ຂອງ ໂຄງການລົງທຶນລັດ / ງົບປະມານ ODA, ການວິເຄາະ ຂະບວນການຂອງທຶນສົມທົບ ODA ແລະ ໂຄງການທີ່ກ່ຽວຂ້ອງໂດຍຜູ້ໃຫ້ທຶນອື່ນໆ ແມ່ນໄດ້ຮັບການຢັ້ງຢືນ.<br>3) ການສຶກສາຂໍ້ມູນເບື້ອງຕົ້ນ ແມ່ນໄດ້ປະສົບຜົນສຳເລັດ ສຳລັບການທົບທວນຄືນ ແຜນການປະຕິບັດ.<br>4) ການສະແດງໃຫ້ເຫັນຄວາມທ້າທາຍ ຂອງການຄຸ້ມຄອງກອງທຶນສົມທົບ ODA ແມ່ນໄດ້ຈັດຕັ້ງປະຕິບັດ.<br>5) ອົງປະກອບຕ່າງໆ ຂອງ ແຜນການປັບປຸງ ກອງທຶນສົມທົບ ODA ແມ່ນໄດ້ຖືກສັງລວມ. |
| 2 ການກວດສອບ ຂະບວນການຄຸ້ມຄອງ ແລະ ຕາຕະລາງແຜນ ຂອງ ທຶນສົມທົບ ODA, ການຄຸ້ມຄອງ ໂຄງການລົງທຶນລັດ ໃນລະດັບເມືອງ ແລະ ການຄຸ້ມຄອງຂະແໜງການໂຄງການ. ໂດຍໃຫ້ສອດຄ່ອງກັບ ຂະບວນການສ້າງແຜນງົບປະມານປະຈຳປີ ແລະ ຕາມປະຕິທິນແມ່ນຈະເລີ່ມຈາກແຂວງ ອຸດົມໄຊ, ຄຳມ່ວນ ແລະ ສາລະວັນ. | ໄດ້ທຳການວິເຄາະ ໜ້າວຽກປັດຈຸບັນ ກ່ຽວກັບ ການແຈກຢາຍງົບປະມານ ແຫ່ງຊາດ ODA. |
| 3 ຍົກລະດັບ "ປື້ມຄູ່ມື ສຳລັບການຄຸ້ມຄອງໂຄງການລົງທຶນຂອງລັດ" ແລະ "ປື້ມຄູ່ມື ສຳລັບແຜນງານ ໂຄງການລົງທຶນຂອງລັດ" ໂດຍແນໃສ່ການຄຸ້ມຄອງກອງທຶນສົມທົບ ODA, ການຄຸ້ມຄອງ ໂຄງການລົງທຶນລັດ ໃນລະດັບເມືອງ ແລະ ການຄຸ້ມຄອງແຜນງານຂອງຂະແໜງການ. ພ້ອມທັງ | ແບບຟອມ SPIS ແລະ ການແກ້ໄຂ ວຽກງານການປະເມີນແບບປຽບທຽບ ແມ່ນໄດ້ເອົາເຂົ້າຢູ່ໃນ ປື້ມຄູ່ມື. |

| ກິດຈະກຳຕ່າງໆ | ການບັນທຶກ |
|---|---|
| ພັດທະນາ ຄູ່ມື ກ່ຽວກັບປະເດັນເຫຼົ່ານີ້ ເຊັ່ນກັນ | |
| 4 ຜະລິດ ແລະ ແຈກຢາຍ ປຶ້ມຄູ່ມື ໃຫ້ແກ່ອົງການຈັດຕັ້ງທີ່ກ່ຽວຂ້ອງທັງໝົດ. (ຈັດຕັ້ງປະຕິບັດ ກິດຈະກຳນີ້ພ້ອມກັບຂໍ້ 2-4) | ປື້ມຄູ່ມືໂຄງການ ໄດ້ພິມອອກນຳໃຊ້ໂດຍບໍ່ໄດ້ຮັບການອະນຸມັດຈາກລັດຖະມົນຕີ ດັ່ງນັ້ນ ການພິມຈິ່ງຖືກເລື່ອນໄປພິມໃນສົກປີຕໍ່ໄປ. |
| 5 ຊ່ວຍເຫຼືອ MPI ໃນການພັດທະນາ ຫຼັກສູດການຝຶກອົບຮົມ ແລະ ເຄື່ອງມືຕ່າງໆ. (ຈັດຕັ້ງປະຕິບັດ ກິດຈະກຳນີ້ພ້ອມກັບຂໍ້ 2-5) | 1) ຫົວຂໍ້ການຝຶກອົບຮົມ ຂອງສົກປີ 2009/10ໄດ້ຖືກແກ້ໄຂ<br>2) ການພັດທະນາ ຫຼັກສູດ ແລະ ຫົວຂໍ້ຕ່າງໆ ຂອງ ການຝຶກອົບຮົມ ທຶນສົມທົບ ODA ແມ່ນໄດ້ປະຕິບັດສຳເລັດ ໂດຍຜູ້ບັນລະຍາຍ.<br>3) ຫຼັກສູດການຝຶກອົບຮົມ, ຫົວຂໍ້ການຝຶກອົບຮົມ ແລະ ບົດນຳການຝຶກອົບຮົມ ແມ່ນໄດ້ຮັບການພັດທະນາ. |
| 6 ຊ່ວຍເຫຼືອ MPI ໃນການຈັດຝຶກອົບຮົມ ແລະ ກອງປະຊຸມໃຫ້ແກ່ບັນດາແຂວງ ແລະ ກະຊວງຕ່າງໆ. (ຈັດຕັ້ງປະຕິບັດ ກິດຈະກຳນີ້ພ້ອມກັບຂໍ້ 2-6) | ການຊ່ວຍເຫຼືອໃນການຈັດຝຶກອົບຮົມ ແລະ ກອງປະຊຸມ ໃຫ້ແກ່ບັນດາແຂວງ ແລະ ກະຊວງທັງໝົດ ໄດ້ປະຕິບັດ ຈົນຮອດກາງເດືອນ ກຸມພາ. |
| 7 ຊ່ວຍເຫຼືອ MPI ໃນການປະຕິບັດ OJT ສຳລັບບັນດາແຂວງ ແລະ ກະຊວງຕ່າງໆ ທັງໝົດ (ຈັດຕັ້ງປະຕິບັດ ກິດຈະກຳນີ້ພ້ອມກັບຂໍ້ 2-7) | ໄດ້ຈັດຕັ້ງປະຕິບັດໃນ ເດືອນມີນາ 2009 |
| 8 ຊ່ວຍເຫຼືອ MPI ໃນການປະຕິບັດ ການປະເມີນຜົນຂອງການປະເມີນ ສຳລັບການປະເມີນໂຄງການລົງທຶນລັດແມ່ນໄດ້ຖືກປະເມີນ ໂດຍການຕິດຕາມຕົວຊີ້ວັດ ຢູ່ໃນແຜນງານຂອງຂະແໜງການ. | ຈະໄດ້ຈັດຕັ້ງປະຕິບັດໃນເດືອນ ກໍລະກົດ 2010 |
| 9 ຊ່ວຍເຫຼືອ MPI ໃນການດັດແກ້ປື້ມຄູ່ມື ໂດຍອີງໃສ່ຄຳຄິດເຫັນກັບຄືນ ຈາກກິດຈະກຳ 4-6 ແລະ 4-7 (ຈັດຕັ້ງປະຕິບັດ ກິດຈະກຳນີ້ພ້ອມກັບຂໍ້ 2-9) | ຈະໄດ້ຈັດຕັ້ງປະຕິບັດໃນເດືອນ ກໍລະກົດ 2010 |

(3) ຈຸດສຳຄັນສຳລັບເຄິ່ງປີຕໍ່ໄປ

<u>ວຽກງານທີ່ຍັງເຫຼືອ ທີ່ຕ້ອງລວບລວມ ໝາກຜົນ 4-1</u>

ມັນແມ່ນແຜນຕາຕະລາງເພື່ອໃຫ້ສຳເລັດໃນໝາກຜົນ 4-1 ເພື່ອໃຫ້ສຳເລັດວຽກງານດັ່ງກ່າວໃນຕອນທ້າຍຂອງໂຄງການ;

1) ເພື່ອປະເມີນຄວາມສາມາດຂອງພະນັກງານ ພາຍຫຼັງການຝຶກອົບຮົມ ໂດຍການນຳໃຊ້ ຕາຕະລາງແຜນການປະເມີນຜົນ ຂອງການປະເມີນ ເຊິ່ງຈະໄດ້ປະຕິບັດໃນກາງປີ 2010,
2) ເພື່ອກະກຽມ ແລະ ອອກປື້ມຄູ່ມື. ກິດຈະກຳນີ້ແມ່ນ ຮ່ວມກັບອົງປະກອບຍ່ອຍອື່ນໆ, ເຊິ່ງຂື້ນກັບຄວາມຄືບໜ້າໃນອະນາຄົດ ຂອງການປະສານງານ ກ່ຽວກັບ ການຄຸ້ມຄອງໂຄງການລົງທຶນລັດ ໃນລະດັບເມືອງ ພ້ອມກັບ ກະຊວງ ແລະ ຜູ້ໃຫ້ທຶນອື່ນໆ, ແລະ ຫຼັງຈາກນັ້ນ ຈະເປັນການຮັບຮອງເອົາປື້ມຄູ່ມືທີ່ເປັນທາງການ ໂດຍ MPI ແລະ

3) ເພື່ອຈັດຕັ້ງປະຕິບັດ ຝຶກອອົບຮົມໃຫ້ແກ່ພະນັກງານ ຂອງພະແນກ ຢູ່ໃນແຂວງຊຽງຂວາງ ແລະ ແຂວງຫົວພັນ. ທັງສອງແຂວງນີ້ແມ່ນຍັງບໍ່ທັນໄດ້ເຂົ້າຮ່ວມການຝຶກອົບຮົມຄັ້ງທີ່ຜ່ານມາ, ເນື່ອງຈາກວ່າການປະສານງານເພື່ອຈັດຄູຝຶກຈາກພາກສ່ວນຂອງ DIC ແມ່ນໃຊ້ເວລາດົນກວ່າສອງພະແນກອື່ນ.

<u>ປະເດັນສຳຄັນອື່ນໆ ທີ່ສາມາດເປັນຜົນກະທົບຕໍ່ໂຄງການ</u>

4) ***ລະບົບການສະໜັບສະໜູນ ຂອງວຽກ SPIS.*** ໂຄງການຮັບຮູ້ວ່າ ໃນສົກປີ 2009-2010 ແມ່ນຊ່ວງການດຳເນີນແບບທົດລອງ ສຳລັບ ວຽກຕົວຢ່າງຂອງ SPIS ແລະ ໃນສົກປີຕໍ່ໄປ 2010-2011 ຈະເປັນຊ່ວງການດຳເນີນຕົວຈິງຢ່າງເປັນທາງການ ທີ່ໄດ້ຮັບຮອງເອົາໂດຍດຳລັດ ຂອງ ODA. ໂຄງການມີຈຸດປະສົງເພື່ອປະສານງານໃນຂັ້ນຕອນທີ່ຈຳເປັນ ໂດຍການສົນທະນາແບບໃກ້ສິດ ກັບ ຜູ້ແທນຂອງ MPI ທ່ານ ດຣ. ບຸນທະວີ.

5) ***ການປະສານງານກັບແບບຟອມທີ່ຄ້າຍຄືອື່ນໆ.*** ການກຳນົດແບບຟອມ ແລະ ແບບອື່ນໆ ສຳລັບ ການຄຸ້ມຄອງທຶນສົມທົບ ODA ເຊັ່ນວ່າ ແບບຟອມຈາກ ໂຄງການ RMT ຂອງ UNDP ແລະ PIS/PIR/PWP ໄດ້ມີຄວາມກ້າວໜ້າໄປຢ່າງຕໍ່ເນື່ອງ. ໂຄງການຄວນມີການສົ່ງເສີມການປະສານງານ ກັບຜູ້ປະຕິບັດທີ່ກ່ຽວຂ້ອງ ກັບແບບຟອມຕ່າງໆ. ດັ່ງນັ້ນ ແບບຟອມ SPIS ແລະ ແບບຟອມອື່ນໆ ສາມາດນຳໃຊ້ໄດ້ຢ່າງມີປະສິດທິພາບ.

<u>ການສັງລວມແບບຟອມ SPIS ແລະ ແບບຟອມອື່ນໆທີ່ກ່ຽວຂ້ອງກັບ ການຄຸ້ມຄອງ ODA</u>

| | ຊື່ | ຈຸດປະສົງ | ໃຜເປັນຄົນຂຽນ? | ຊ່ວງເວລາ ລວບລວມ/ສົ່ງ |
|---|---|---|---|---|

| | ຊື່ | ຈຸດປະສົງ | ໃຜເປັນຄົນຂຽນ? | ຊ່ວງເວລາ ລວບລວມ/ສົ່ງ |
|---|---|---|---|---|
| 1 | ລາຍການ ODA | ລວບລວມຜົນສະຫຼຸບຂອງທຸກໆໂຄງການ ODA | DPI ແລະ ກະຊວງຕ່າງໆ ແລະ ພະແນກຕ່າງໆຂອງແຂວງ | ພາຍໃນເດືອນມັງກອນ |
| 2 | PIS/PIR/PWP | ການກະກຽມຂໍ້ມູນຂອງໂຄງການ ໂດຍເຈົ້າຂອງໂຄງການ | ຫົວໜ້າໂຄງການທັງໝົດ | ທັນວາ - ມັງກອນ |
| 3 | ແບບສອບຖາມFAR | ການກະກຽມ FAR | ຄູ່ພັດທະນາ | ທັນວາ - ມັງກອນ |
| 4 | SPIS | ເລືອກໃຊ້ສຳລັບ NCB | DPI ແລະ ກະຊວງຕ່າງໆ ແລະ ພະແນກຕ່າງໆຂອງແຂວງ | ແຕ່ທັນວາ-ກຸມພາ |

ກະກຽມໂດຍ ທີມງານໂຄງການ PCAP2

6) ***ການຂະຫຍາຍຈຳນວນຄູຝຶກຈາກພາກສ່ວນ DIC ສຳລັບອົງປະກອບຍ່ອຍນີ້.*** ເຖິງແມ່ນວ່າ ກົມຮ່ວມມືສາກົນ (DIC) ຈະມີຄວາມໄຝ່ຝັນທີ່ຈະເປັນເຈົ້າພາບ ຂອງການຝຶກອົບຮົມຫຼັກ ກ່ຽວກັບ ເລື່ອງ ODA ເຊິ່ງກໍ່ລວມທັງການຄຸ້ມຄອງທຶນສົມທົບ ODA ນຳ, ການຈັດຄູຝຶກເຂົ້າໃນການຝຶກອົບຮົມທີ່ຜ່ານມາແມ່ນໄດ້ບໍ່ກາຍ 2 ຄົນ. ເຖິງແມ່ນວ່າຄວາມພະຍາຍາມຂອງພະນັກງານ ກົມຮ່ວມມືສາກົນ (DIC) ຈະມີຫຼາຍເກີນຂອບເຂດ ຄືຕ້ອງສູງກວ່າການປະເມີນ, ຈຳນວນຂອງຄູຝຶກນີ້ ແມ່ນບໍ່ພຽງພໍຕໍ່ແຂວງທັງໝົດ ແລະ ຄູຝຶກຈາກ DOE ແລະ DOP ກໍ່ໄດ້ຖືກສັບຊ້ອນໃສ່ບ່ອນວ່າງ ໃນທີ່ສຸດ. ໃນການຝຶກອົບຮົມຊຸດຕໍ່ໄປ, ຄູຝຶກ 2 ຄົນຂອງ ກົມຮ່ວມມືສາກົນ (DIC) ຜູ້ທີ່ໄດ້ຮັບການຝຶກອົບຮົມ TOT ຄັ້ງຜ່ານມາຮຽບຮ້ອຍແລ້ວ ຈະສາມາດເປັນຄູຝຶກຮ່ວມກັບຄູຝຶກທັງໝົດ ກ່ຽວກັບຫົວຂໍ້ນີ້ໄດ້ເຊັ່ນກັນ. ສະນັ້ນ, ຈິ່ງໄດ້ຄາດຫວັງວ່າ ກົມຮ່ວມມືສາກົນ ຈະເພີ້ມການພົວພັນ ເພື່ອເພີ້ມຈຳນວນ ຂອງຄູຝຶກ ສຳລັບຫົວຂໍ້ນີ້. ດັ່ງນັ້ນເຫັນວ່າ ການສົນທະນາປຶກສາຫາລືລະຫວ່າງ ກະຊວງແຜນການ ແລະ ການລົງທຶນ ກັບ ທີມງານຂອງໂຄງການ PCAP 2 ແມ່ນມີຄວາມສຳຄັນ ໃນການຊອກຫາວິທີທາງແກ້ໄຂບັນຫານີ້.

### 2.4.2 [ໝາກຜົນ 4-2] ການຄຸ້ມຄອງໂຄງການລົງທຶນລັດໃນລະດັບເມືອງ

(1) ຄາດໝາຍຜົນສຳເລັດຂອງໝາກຜົນ 4-2

ຕາມທີ່ໄດ້ສະແດງຢູ່ໃນແຜນວາດຂ້າງລຸ່ມນີ້, ຕົວຊີ້ວັດສຳລັບ ໝາກຜົນ 4-2 ແມ່ນຄວາມຄືບໜ້າທີ່ເປັນແຜນເພື່ອໃຫ້ສຳເລັດ ໃນຕອນທ້າຍຂອງໂຄງການ. ແບບຟອມໃໝ່ສຳລັບບົດສະເໜີໂຄງການ ແລະ ການປະເມີນໃນຕໍ່ໜ້າ ຈຳເປັນຕ້ອງໄດ້ມີການສຶກສາ ໂດຍໂຄງການຜູ້ໃຫ້ທຶນອື່ນໆ, ເພື່ອໃຫ້ມີປະສິດທິພາບໃນການນຳໃຊ້. ເຖິງຢ່າງໃດກໍ່ຕາມ, ແບບຟອມໃໝ່ເຫຼົ່ານີ້ ອາດຈະກາຍເປັນແບບຟອມມາດຖານ ສຳລັບການປະຕິບັດ ແລະ ປະເມີນຜົນໂຄງການ ລະດັບເມືອງ. ຄຽງຄູ່ກັບແບບຟອມຕ່າງໆ, ທິດທາງ ແລະ ວິທີການອັນໃໝ່ໃນການຄຸ້ມຄອງໂຄງການລົງທຶນລັດລະດັບເມືອງ ຈະເປັນຜົນສະທ້ອນຕໍ່ຄູ່ມືຂອງໂຄງການ.

<u>ຕາຕະລາງຜົນສຳເລັດ ໝາກຜົນ 4-2</u>

| ຕົວຊີ້ວັດ | ຜົນສຳເລັດ |
|---|---|
| 4-2 "ຄູ່ມືສຳລັບການຄຸ້ມຄອງໂຄງການ ການລົງທຶນຂອງລັດ" ແລະ ຄູ່ມືຕ່າງໆແມ່ນໄດ້ຮັບການປັບປຸງ ຫຼື ພັດທະນາ ເພື່ອໃຫ້ກວມໄດ້ການຄຸ້ມຄອງໂຄງການລົງທຶນລັດ ຂັ້ນເມືອງ. ເອກະສານ ແລະຄູ່ມືຕ່າງໆ ແມ່ນໄດ້ຮັບຮອງເອົາ ແລະ ແຈກຢາຍໃຫ້ແກ່ພາກສ່ວນຂອງລັດທີ່ກ່ຽວຂ້ອງທັງໝົດ. | ບົດສະເໜີໂຄງການໃໝ່ຂອງໂຄງການລົງທຶນລັດ ແລະ ແບບຟອມການປະເມີນແມ່ນໄດ້ພັດທະນາ ສຳລັບການຄຸ້ມຄອງໂຄງການລົງທຶນລັດລະດັບເມືອງ, ແລະ ສິ່ງຜົນສະທ້ອນໃຫ້ແກ່ຄູ່ມືໂຄງການ ພ້ອມທັງການແນະນຳວິທີການ ແລະ ທິດທາງທີ່ຫຼາກຫຼາຍສຳລັບການປະຕິບັດໂຄງການລະດັບເມືອງ ລວມທັງ ທຶນຂອງຜູ້ທ້ທຶນ ແລະ ທຶນພາຍໃນ ສຳລັບການພັດທະນາ ຊົນນະບົດ ແລະ ການຫຼຸດຜ່ອນຄວາມທຸກຍາກ.<br><br>ການຝຶກອົບຮົມກ່ຽວກັບການຄຸ້ມໂຄງການລົງທຶນລັດໃນທົ່ວປະເທດ, ການປຶກສາຫາລືແມ່ນໄດ້ໂອ້ລົມກັນຢູ່ໃນຈຳນວນຂອງ ພະນັກງານຂອງແຂວງກ່ຽວກັບວິທີການສະໜັບສະໜູນໃຫ້ແກ່ເມືອງ ກ່ຽວກັບ ການຄຸ້ມຄອງໂຄງການລົງທຶນລັດ, ເຊິ່ງກໍ່ເປັນພາກສ່ວນໜຶ່ງຂອງການຝຶກອົບຮົມ. ທິດທາງທີ່ຫຼາກຫຼາຍຂອງການປະຕິບັດໃນພື້ນທີ່ສະເພາະ ແມ່ນໄດ້ຍົກຂຶ້ນມາເປັນຫົວຂໍ້ສົນທະນາກັນ, ຊອກຫາໂອກາດເພື່ອສຶກສາ ລັກສະນະຂອງເມືອງໃນແຕ່ລະແຂວງ. |

(2) ການທົບທວນຄືນການຈັດຕັ້ງປະຕິບັດໄລຍະກາງ

1) ການຕິດຕາມກວດກາວິທີການຄຸ້ມຄອງໂຄງການລົງທຶນລັດຂັ້ນເມືອງ ແລະ ຜົນຂອງການຝຶກອົບຮົມ

ຢູ່ໃນການຝຶກອົບຮົມການຄຸ້ມຄອງໂຄງການລົງທຶນລັດທົ່ວປະເທດ, ແບບຟອມໃໝ່ ສໍາລັບບົດສະເໜີຂອງໂຄງການ ແລະ ການປະເມີນແມ່ນໄດ້ນໍາສະເໜີ. ວາລະຂອງກອງປະຊຸມ ກໍ່ໄດ້ຈັດຂຶ້ນ ໃຫ້ພະນັກງານຂອງແຂວງສາມາດປຶກສາຫາລື ກ່ຽວກັບລັກສະນະຂອງເມືອງຂອງພວກເຂົາ, ແລະ ສ້າງຍຸດທະວິທີເພື່ອຊ່ວຍສະໜັບສະໜູນເມືອງດັ່ງກ່າວ.

(3) ຈຸດສໍາຄັນ ສໍາລັບເຄິ່ງສົກປີຕໍ່ໄປ

ລະດັບການປຶກຄອງຢູ່ຂັ້ນສູນກາງ, ແມ່ນໂຄງການຈະສືບຕໍ່ປຶກສາຫາລືກັບ ຜູ້ໃຫ້ທຶນ ຕົວແທນກອງທຶນພາຍໃນ ເພື່ອລວບລວມເອົາແບບຟອມຕ່າງໆ ແລະ ທິດທາງການປະຕິບັດໂຄງການເຂົ້າກັນ. ເຖິງແມ່ນວ່າມັນຈະເປັນການຍາກ ໃນການລວບລວມຂະບວນການທັງໝົດເຂົ້າກັນ, ໂຄງການຈະສືບຕໍ່ສົ່ງເສີມວິທີການນີ້ ເຊິ່ງອີງຕາມການປະກາດແຈ້ງການຢູ່ວຽງຈັນ.

ເປັນການກ້າວເຂົ້າໃກ້ຫາເມືອງ, ໂຄງການຈະສືບຕໍ່ຍັບເຂົ້າໃກ້ ແຂວວງ ເຊິ່ງເປັນກຸນແຈສໍາຄັນໃນການຝຶກ ແລະ ແນະນໍາໃນລະດັບເມືອງ. ອີກຢ່າງໜຶ່ງ ເພື່ອເປັນການປັບປຸງຄູ່ມືຂອງໂຄງການ, ໂຄງການຈະພັດທະນາຄູ່ມື ແລະ ຊຸດຂອງການຝຶກອົບຮົມ ເພື່ອການເຜີຍແຜ່ທີ່ມີປະສິດທິພາບ.

### 2.4.3 [ໝາກຜົນ 4-3] ການຄຸ້ມຄອງແຜນງານຂອງຂະແໜງການ

.

(1) ຄາດໝາຍຜົນສໍາເລັດຂອງ ໝາກຜົນ 4-3

ດັ່ງທີ່ໄດ້ກ່າວຢູ່ໃນຕາຕະລາງຂ້າງລຸ່ມນີ້, ຕົວຊີ້ວັດ 4-2 ແລະ 4-3 ແມ່ນດໍາເນີນໄປໄດ້ດີ ສໍາລັບຕາຕະລາງແຜນຄວາມສໍາເລັດ ໃນຕອນທ້າຍຂອງໂຄງການ. ຄູ່ມືຂອງແຜນງານ ແມ່ນໄດ້ຮັບການຍົກລະດັບ, ເຊິ່ງ

ລວມມີຫົວຂໍ້ໃໝ່, ກໍລະນີສຶກສາຂອງເຄືອຈຸດປະສົງຂອງແຜນງານ, ແຜນອາດທ່ີ່ລຽງຕາມລໍາດັບ ແລະ ແຜນທີ່ຂອງໂຄງການລົງທຶນລັດ ໃນ 3 ແຂວງຕົວແບບ. ການສຶກສາໄດ້ເຜີຍແຜ່ ແລະ ແນະນໍາປະເດັນທີ່ສໍາຄັນຕ່າງໆ ສໍາລັບແຜນການພັດທະນາທີ່ເຂັ້ມແຂງ ຂອງ 5 ປີຕໍ່ໜ້າ (SEDPs) 2010-2015. ຄູ່ມືແມ່ນໄດ້ຖືກແຈກຢາຍໃຫ້ແກ່ ພາກສ່ວນທີ່ກ່ຽວຂ້ອງຢູ່ໃນຫຼັກສູດການຝຶກອົບຮົມ ເຊິ່ງໄດ້ດໍາເນີນ ຕັ້ງແຕ່ເດືອນທັນວາ 2009 ຫາ ເດືອນກຸມພາ 2010. ຈໍານວນຂອງພະນັກງານທີ່ຫຼາຍກວ່າແຜນທີ່ວາງໄວ້ ຢູ່ໃນຕົວຊີ້ວັດ 4-3 ແມ່ນໄດ້ມີການວາງແຜນ ເພື່ອໃຫ້ເຂົ້າຮ່ວມການຝຶກອົບຮົມ ກ່ຽວກັບອົງປະກອບຍ່ອຍນີ້. ຈໍານວນຄູຝຶກຈາກແຕ່ລະພະແນກ ຂອງກະຊວງແຜນການ ແລະ ການລົງທຶນໄດ້ວາງແຜນເພື່ອປັບປຸງ ສໍາລັບອົງປະກອບຍ່ອຍຄື: 4 ທ່ານ ຈາກກົມປະເມີນຜົນ, 1 ທ່ານ ຈາກກົມແຜນການ ແລະ ລວມທັງໝົດແມ່ນ 5 ທ່ານຕາມລໍາດັບ.

<u>ຕາຕະລາງຜົນສໍາເລັດ ໝາກຜົນ 4-3</u>

<table>
<tr><th>ຕົວຊີ້ວັດ</th><th>ຜົນສໍາເລັດ</th></tr>
<tr><td>4-2 "ປື້ມຄູ່ມືສໍາລັບການຄຸ້ມຄອງໂຄງການລົງທຶນລັດ" ແມ່ນໄດ້ຮັບການປັບປຸງ, ໄດ້ຮັບຮອງເອົາ ແລະ ແຈກຢາຍໃຫ້ແກ່ພະນັກງານລັດທັງໝົດທີ່ກ່ຽວຂ້ອງກັບການຄຸ້ມຄອງໂຄງການລົງທຶນຂອງລັດ.</td><td>ປື້ມຄູ່ມືຂອງແຜນງານໄດ້ຖືກດັດແກ້ ໂດຍການວາງກໍລະນີເຄື່ອງມື ຂອງແຜນງານ ແລະ ຄວາມທ້າທາຍຂອງການຄຸ້ມຄອງແຜນງານຂອງຂະແໜງການ.</td></tr>
<tr><td>4-3 ມີພະນັກງານ MPI ຫຼາຍກວ່າ 20 ທ່ານ ແລະ ແລະ ພະນັກງານແຜນການຫຼາຍກວ່າ 5 ທ່ານໃນແຕ່ລະແຂວງ, ກະຊວງ ແລະ ອົງການຈັດຕັ້ງຂອງລັດ ອື່ນໆ ທີ່ກ່ຽວຂ້ອງແມ່ນສາມາດຄຸ້ມຄອງໂຄງການ PIP ໄດ້ທັງສອງ ໂດຍທີ່ສອດຄອງກັບປື້ມຄູ່ມື ທີ່ໄດ້ມີການປັບປຸງ ແລະ ຍົກລະດັບໃໝ່ ແລະ ການຝຶກອົມຮົມໃຫ້ແກ່ພະນັກງານຂອງແຂວງ ແລະ ເມືອງ ທີ່ກ່ຽວຂ້ອງ.</td><td>4) ໃນຕອນທ້າຍເດືອນ ມັງກອນ 2010, ການຝຶກອົບຮົມແມ່ນໄດ້ທໍາການຈັດຕັ້ງປະຕິບັດ. ຈໍານວນຂອງພະນັກງານ ຜູ້ທີ່ໄດ້ຮັບການຮັບການຝຶກອົບຮົມຢູ່ໃນຫຼັກສູດຝຶກອົບຮົມແມ່ນຢູ່ໃນຕາຕະລາງລຸ່ມນີ້.<br>5) ປື້ມຄູ່ມື ແລະ ເຄື່ອງມືໃນການຝຶກອົບຮົມ ແມ່ນໄດ້ຮັບການປັບປຸງຕາມອົງປະກອບຍ່ອຍນີ້.<br>6) ຄວາມສາມາດຈະຖືກ ປະເມີນໂດຍ ການປະເມີນຜົນ ຂອງການປະເມີນ ນັ້ນແມ່ນຕາຕະລາງແຜນຈັດຕັ້ງປະຕິບັດໃນກາງປີ 2010.<br>
<table>
<tr><th>ອົງການຈັດຕັ້ງທີ່ຢູ່ໃນແຜນ</th><th>ຈໍານວນຂອງພະນັກງານທີ່ໄດ້ຮັບການຝຶກອົບຮົມ</th></tr>
<tr><td>MPI</td><td>ປະມານ 14 ທ່ານ (ຈະຖືກຝຶກໂດຍການຝຶກ TOT)</td></tr>
<tr><td>DPI</td><td>ປະມານ 119 - 204 ທ່ານ</td></tr>
<tr><td>ເຈົ້າຂອງໂຄງການ</td><td>ປະມານ 510 - 595 ທ່ານ</td></tr>
<tr><td>ອົງການຈັດຕັ້ງອື່ນໆ ຂອງລັດທີ່ກ່ຽວຂ້ອງ</td><td>ປະມານ 108 ທ່ານ</td></tr>
</table>
</td></tr>
</table>

| | ລວມທັງໝົດ | ປະມານ 751 - 921 ທ່ານ |
|---|---|---|

(2) ການທົບທວນຄືນ ການຈັດຕັ້ງປະຕິບັດ ໃນໄລຍະກາງ

ກິດຈະກຳຕ່າງໆທີ່ຕ້ອງສຳເລັດໃນ ໝາກຜົນ 4-3, ຄວາມເຂັ້ມແຂງຂອງການຄຸ້ມຄອງແຜນງານຂອງຂະແໜງການ ແມ່ນດຳເນີນໄປດ້ວຍດີ. ການບັນທຶກກິດຈະກຳຕ່າງໆ ແມ່ນໄດ້ສັງລວມ ເຂົ້າໃນຕາຕະລາງ. ການຝຶກອົບຮົມຊຸດດນີ້ ແມ່ນໄດ້ສຸມໃສ່ການນຳສະເໜີ ກໍລະນີສຶກສາຂອງເຄື່ອງມືຂອງແຜນງານຢູ່ໃນ 3 ແຂວງຕົວແບບ, ເຊິ່ງມີຈຸດປະສົງ ເພື່ອກຽມບົດຮຽນທີ່ເປັນປະໂຫຍດສຳລັບການກະກຽມແຜນພັດທະນາ 5 ປີຕໍ່ໄປ ຢູ່ໃນອົງການຈັດຕັ້ງຂອງລັດໃນ ສປປລາວ.

<u>ບັນທຶກກິດຈະກຳຕ່າງໆ ທີ່ສຳເລັດ ໝາກຜົນ4-3</u>

| Activities | Records |
|---|---|
| 1 ສຶກສາຂະບວນການຄຸ້ມຄອງ ທຶນສົມທົບ ODA , ການຄຸ້ມຄອງໂຄງການລົງທຶນຂອງລັດ ໃນລະດັບ ເມືອງ ແລະ ການຄຸ້ມຄອງແຜນງານຂອງຂະ ແໜງການ | ແຜນພັດທະນາແຫ່ງຊາດ, ແຜນພັດທະນາຂະແໜງການ, ແຜນ ພັດທະນາແຂວງ, ແລະ ແຜນປະຕິບັດຂອງແຜນແຫ່ງຊາດແມ່ນ ໄດ້ຖືກວິເຄາະ ເພື່ອການທົບທວນຄືນແຜນການປະຕິບັດ. |
| 2 ການກວດສອບ ຂະບວນການຄຸ້ມຄອງ ແລະ ຕາຕະລາງ ແຜນ ຂອງ ທຶນສົມທົບ ODA, ການຄຸ້ມຄອງ ໂຄງການ ລົງທຶນລັດ ໃນລະດັບເມືອງ ແລະ ການຄຸ້ມຄອງຂະແໜງ ການໂຄງການ. ໂດຍໃຫ້ສອດຄ່ອງກັບ ຂະບວນການສ້າງ ແຜນງົບປະມານປະຈຳປີ ແລະ ຕາມປະຕິທິນແມ່ນຈະເລີ້ ມຈາກແຂວງ ອຸດົມໄຊ, ຄຳມ່ວນ ແລະ ສາລະວັນ. | 1) ກອງປະຊຸມ ການກະກຽມໄດ້ຖືກຈັດຂື້ນ ເພື່ອຄັດເລືອກຂະ ແໜງການຕົວແບບ ເພື່ອເປັນການກະກຽມການສ້າງແຜນ ງານຂອງຂະແໜງການ.<br>2) ຄວາມທ້າທາຍຂອງແຜນພັດທະນາແຂວງຂອງຂະແໜງການ ຕ່າງໆ ແມ່ນໄດ້ສັງລວມເພື່ອການກະກຽມສ້າງແຜນງານຂອງ ຂະແໜງການ.<br>3) ບາງກໍລະນີຂອງເຄື່ອງມືແຜນງານ ແມ່ນໄດ້ປະສົບຜົນສຳ ເລັດ ສຳລັບການສ້າງແຜນງານຂອງຂະແໜງການ.ຫ |
| 3 ຍົກລະດັບ “ປື້ມຄູ່ມື ສຳລັບການຄຸ້ມຄອງໂຄງການລົງທຶນ ຂອງລັດ” ແລະ "ປື້ມຄູ່ມື ສຳລັບແຜນງານ ໂຄງການລົງທຶນ ຂອງລັດ" ໂດຍແນໃສ່ການຄຸ້ມຄອງກອງທຶນສົມທົບ ODA, ການຄຸ້ມຄອງ ໂຄງການລົງທຶນລັດ ໃນລະດັບເມືອງ ແລະ ການຄຸ້ມຄອງຂະແໜງການໂຄງການ. ພ້ອມທັງ ພັດທະນາ ຄູມື ກ່ຽວກັບປະເດັນເຫຼົ່ານີ້ ເຊັ່ນກັນ | ເຄື່ອງມືແຜນງານ, ແລະ ຄວາມທາທາຍແມ່ນໄດ້ເອົາເຂົ້າໃນຄູ່ມື ຂອງແຜນງານ ເພື່ອແກ້ໄຂ. |
| 4 ຜະລິດ ແລະ ແຈກຢາຍ ປື້ມຄູ່ມື ໃຫ້ແກ່ອົງການຈັດຕັ້ງທີ່ ກ່ຽວຂ້ອງທັງໝົດ. (ຈັດຕັ້ງປະຕິບັດ ກິດຈະກຳນີ້ພ້ອມກັບຂໍ້ 2-4) | ປື້ມຄູ່ມືໂຄງການ ໄດ້ພິມອອກນຳໃຊ້ໂດຍບໍ່ໄດ້ຮັບການອະນຸມັດ ຈາກລັດຖະມົນຕີ ດັ່ງນັ້ນ ການພິມຈິ່ງຖືກເລື່ອນໄປພິມໃນສົກປີຕໍ່ ໄປ. |
| 5 ຊ່ວຍເຫຼືອ MPI ໃນການພັດທະນາ ຫຼັກສູດການຝຶກ ອົບຮົມ ແລະ ເຄື່ອງມືຕ່າງໆ. (ຈັດຕັ້ງປະຕິບັດ ກິດຈະກຳນີ້ ພ້ອມກັບຂໍ້ 2-5) | 1) ຫົວຂໍ້ການຝຶກອົບຮົມ ຂອງສົກປີ 2009/10ໄດ້ຖືກແກ້ໄຂ<br>2) ຫຼັກສູດການຝຶກອົບຮົມ, ຫົວຂໍ້ການຝຶກອົບຮົມ ແລະ ບົດນຳ ການຝຶກອົບຮົມ ແມ່ນໄດ້ຮັບການພັດທະນາ. |
| 6 ຊ່ວຍເຫຼືອ MPI ໃນການຈັດຝຶກອົບຮົມ ແລະ ກອງປະຊຸມ ໃຫ້ແກ່ບັນດາແຂວງ ແລະ ກະຊວງຕ່າງໆ. (ຈັດຕັ້ງປະຕິບັດ ກິດຈະກຳນີ້ພ້ອມກັບຂໍ້ 2-6) | ການຕິດຕາມ ກວດກາການຝຶກອົບຮົມ ສຳລັບທຸກໆແຂວງ ແລະ ກະຊວງທັງໝົດ ແມ່ນໄດ້ເລີ່ມຈັດຕັ້ງປະຕິບັດ ຈົນເຖິງກາງເດືອນ ກຸມພາ. |
| 7 ຊ່ວຍເຫຼືອ MPI ໃນການປະຕິບັດ OJT ສຳລັບບັນດາ ແຂວງ ແລະ ກະຊວງຕ່າງໆ ທັງໝົດ (ຈັດຕັ້ງປະຕິບັດ ກິດຈະກຳນີ້ພ້ອມກັບຂໍ້ 2-7) | ໄດ້ຈັດຕັ້ງປະຕິບັດໃນ ເດືອນມີນາ 2009 ເປັນຕົ້ນໄປ |
| 8 ຊ່ວຍເຫຼືອ MPI ໃນການປະຕິບັດ ການປະເມີນຜົນຂອງ ການປະເມີນ ສຳລັບການປະເມີນໂຄງການລົງທຶນລັດແມ່ນ ໄດ້ຖືກປະເມີນ ໂດຍການຕິດຕາມຕົວຊີ້ວັດ ຢູ່ໃນແຜນງານ ຂອງຂະແໜງການ. | ຈະໄດ້ຈັດຕັ້ງປະຕິບັດໃນເດືອນ ກໍລະກົດ 2010 ເປັນຕົ້ນໄປ |

| Activities | Records |
|---|---|
| 9 ຊ່ວຍເຫຼືອ MPI ໃນການດັດແກ້ປື້ມຄູ່ມື ໂດຍອີງໃສ່ຄໍາຄິດເຫັນກັບຄືນ ຈາກກິດຈະກໍາ 4-6 ແລະ 4-7 (ຈັດຕັ້ງປະຕິບັດ ກິດຈະກໍານີ້ພ້ອມກັບຂໍ້ 2-9) | ຈະໄດ້ຈັດຕັ້ງປະຕິບັດໃນເດືອນ ກໍລະກົດ 2010 ເປັນຕົ້ນໄປ |

(3) ຈຸດສໍາຄັນສໍາລັບເຄິ່ງປີຕໍ່ໄປ

1) ***ການປັບປຸງການຝຶກອົບຮົມ ກ່ຽວກັບ ເຄືອຈຸດປະສົງຂອງແຜນງານ* (POT).** ຫົວຂໍ້ຕ່າງໆ ຈະຖືກຮັກສາເອົາໄວ້ ແລະ ກຸ່ມເປົ້າໝາຍ ຈະຕ້ອງໄດ້ຝຶກກ່ຽວກັບອົງປະກອບຍ່ອຍ, ການຄຸ້ມຄອງໂຄງການໃຫ້ມີຄວາມເຂັ້ມແຂງໄດ້ຖືກຈັດວາງຢູ່ໃນວົງກວ້າງລຽງຕາມລໍາດັບ, ການຝຶກອົບຮົມໃນປັດຈຸບັນ ປີ 2009-2010ຂອງໂຄງການແມ່ນສຸມໃສ່ຫົວຂໍ້ໃດໜຶ່ງ, ບົດຝຶກຫັດຂອງການວິເຄາະ ເຄືອຈຸດປະສົງຂອງໂຄງການຕົວຈິງ. ບົດຝຶກຫັດສາມາດເປີດເຜີຍບົດຮຽນທີ່ສໍາຄັນ ທີ່ພະນັກງານປະເຊີນໃນຕົວຈິງກ່ຽວກັບການຄຸ້ມຄອງໂຄງການລົງທຶນລັດ. ໃນຂະນະທີ່ອີກທາງໜຶ່ງ, ມັນນອາດມີຄວາມສໍາຄັນໃນການຖອດຖອນບົດຮຽນທີ່ດີກວ່າ ໂດຍອີງໃສ່ການວິເຄາະດ້ວຍເຄືອຈຸດປະສົງຂອງໂຄງການທີ່ເລິກເຊິ່ງກວ່າ ເພື່ອປັບປຸງເຄື່ອງມືໃນການຝຶກອົບຮົມ ແລະ ເພື່ອສ້າງຄວາມເຂັ້ມແຂງ.
2) ການຝຶກອົບຮົມການເປັນຄູຝຶກ (TOT). ໂຄງການຈະຍົກລະດັບຫົວຂໍ້ການຝຶກອົບຮົມ ໂດຍຮູ້ຈັກບັນຫານີ້ໃນເຄິ່ງເທີມຂອງການຈັດຕັ້ງປະຕິບັດເທື່ອຕໍ່ໄປ.
3) ***ການຈັດລຽງຄືນຄໍາສັບທາງດ້ານວິຊາການ.*** ພະນັກງານສົມທົບໄດ້ບົ່ງໃຫ້ເຫັນບັນຫາຕ່າງໆ ທີ່ປື້ມຄູ່ມືໄດ້ນໍາໃຊ້ຄໍາສັບທາງດ້ານວິຊາການທີ່ສະຫຼັບສັບຊ້ອນຢູ່ສະເໝີ ແລະ ເບິ່ງຄືວ່າຈະເຮັດໃຫ້ມີຄວາມສັບສົນສໍາລັບຜູ້ອ່ານ. ປື້ມຄູ່ມືສະບັບຕໍ່ໄປຄວນມີການປັບປຸງ ກ່ຽວກັບບັນຫານີ້.
4) ***ການແນະນໍາເຄື່ອງມືຂອງແຜນງານອື່ນໆ.*** ປື້ມຄູ່ມືໄດ້ສະແດງໃຫ້ເຫັນກໍລະນີສຶກສາ ຢູ່ໃນແຜນວາດແລະແຜນທີ່ ຂອງໂຄງກການລົງທຶນລັດເປັນທີ່ຮຽບຮ້ອຍ ຢູ່ໃນບັນດາແຂວງຕົວແບບ. ເຖິງຢ່າງໃດກໍ່ຕາມ, ໂຄງການບໍ່ໄດ້ຈັດຝຶກອົບຮົມອີງໃສ່ກໍລະນີສຶກສາ ໃນປັດຈຸບັນ. ຍ້ອນຄວາມຈໍາກັດທາງດ້ານເວລາລະຫວ່າງ ຫົວຂໍ້ຂອງການຝຶກອົບຮົມທັງໝົດ ແລະ ບູລິມະສິດຂອງບົດຝຶກຫັດ ເຄືອຈຸດປະສົງຂອງໂຄງການສໍາລັບການກະກຽມແຜນ 5 ປີ ຕໍ່ໄປ. ໂຄງການຄວນຊອກຫາຄວາມເປັນໄປໄດ້ໃນການນໍາເອົາກໍລະນີສຶກສາ ເຂົ້າໃນຫົວຂໍ້ຕ່າງໆຂອງການຝຶກອົບຮົມໃນສະບັບຕໍ່ໄປ.
5) ***ການຊອກຫາຜູ້ສະໝັກ ທີ່ມີຄວາມສາມາດໃນການເປັນຄູຝຶກ.*** ພະນັກງານ ກະຊວງແຜນການ ແລະ ການລົງຫຼາຍທ່ານ ລວມທັງຜູ້ທີ່ມາເຂົ້າລວມໂຄງການຝຶກອົບຮົມການເປັນຄູຝຶກ ໃນເດືອນທັນວາ 2009, ແລະພະນັກງານຈໍານວນໜຶ່ງແມ່ນມີຄວາມສາມາດທີ່ຈະເປັນຄູຝຶກໄດ້. ເຊິ່ງກະບວງແຜນການ ແລະ ການລົງໄດ້ຈັດຝຶກອົບຮົມອື່ນໆ ນອກຈາກການຝຶກອົບຮົມຂອງໂຄງການ PCAP2, ມັນສາມາດເປັນວິທີທີ່ມີປະສິດທິພາບ ສໍາລັບການຂະຫຍາຍ ຄວາມຮູ້ເພື່ອໃຫ້ການຄຸ້ມຄອງໂຄງການລົງທຶນລັດ ສາມາດພັດທະນາຈໍານວນຂອງຄູຝຶກທີ່ມີຄວາມສາມາດຂອງໂຄງການ. ສະນັ້ນ, ໂຄງການຄວນມີການຮັບຮູ້ຢ່າງຕໍ່ເນື່ອງ ໃນການຊອກຫາໂອກາດໃນການຝຶກອົບຮົມການເປັນຄູຝຶກເພື່ອໃຫ້ໄດ້ຈໍານວນພະນັກງານຄູຝຶກ ທີ່ເພີ້ມຂື້ນ.

## 3. ຄວາມຄືບໜ້າຕໍ່ກັບຄວາມສຳເລັດຈຸດປະສົງຂອງໂຄງການ

ດັ່ງທີ່ໄດ້ກ່າວຢູ່ໃນບົດທີ 2, ກິດຈະກຳຕ່າງໆທີ່ກ່ຽວຂ້ອງກັບໝາກຜົນຕ່າງໆຂອງໂຄງການ ແມ່ນການດຳເນີນຕາມທີ່ໄດ້ວາງແຜນໄວ້ຢູ່ໃນແຜນການດຳເນີນງານ, ແລະ ມັນມີຄວາມປອດໄພທີ່ຈະບອກວ່າໂຄງການແມ່ນມີຄວາມຄືບໜ້າຕໍ່ຄວາມສຳເລັດຈຸດປະສົງຂອງໂຄງການ.

ເພື່ອໃຫ້ສຳເລັດຈຸດປະສົງຂອງງໂຄງການ, "ກະຊວງແຜນການ ແລະ ການລົງທຶນ ແລະ ພະແນກແຜນການ ແລະ ການລົງທຶນ ດຳເນີນໂຄງການໂດຍຜ່ານຂະບວນການປະເມີນແບບໃໝ່ທີ່ໄດ້ນຳສະເໜີ ໂດຍໂຄງການພາຍໃນທີ່ເຄັ່ງຄັດຕໍ່ເພດານຂອງງົບປະມານ, ແລະ ຂັ້ນຕອນຕ່າງໆທີ່ໄດ້ມາດຕະຖານຕາມແຜນທີ່ໄດ້ວາງເອົາໄວ້, ແລະ ປັດຈຸບັນແມ່ນຢູ່ໃນຂັ້ນຕອນການຈັດຝຶກອົບຮົມ ແລະ ຕິດຕາມກວດກາ ການປະຕິບັດຂະບວນການຄຸ້ມຄອງໂຄງການລົງທຶນຂອງລັດ ສຳລັບການສະເໜີຂໍງົບປະມານໃນສົກປີ 2010/11. ໃນເວລາດຽວກັນ, ມັນຍາກທີ່ຈະຕັດສິນ ໃນຈຸດນີ້ ວ່າຈຸດປະສົງຂອງໂຄງການຈະສາມາດປະສົບຜົນສຳເລັດໄດ້ຫຼືບໍ່?.

[ຕົວຊີ້ວັດຕ່າງໆ ທີ່ມີຫຼາກຫຼາຍຈຸດປະສົງ ສຳລັບ ຈຸດປະສົງຂອງໂຄງການ]

- ✧ ເປີເຊັນຂອງ ທຶນພາຍໃນຂອງໂຄງການລົງທຶນຂອງລັດ ແລະ ໂຄງການທຶນສົມທົບ ODA, ເຊິ່ງໄດ້ຮັບການປະເມີນ, ຕິດຕາມກວດກາ ແລະ ປະເມີນຜົນ ຕາມເພດານງງົບປະມານປະຈຳປີ ໂດຍສະເພາະຕາຕະລາງແຜນປະຕິບັດຕາມງົບປະມານ, ໄດ້ເພີ້ມຂຶ້ນເຖິງ 100% ໃນຕອນທ້າຍຂອງໂຄງການ PCAP2.
- ✧ ບົດລາຍງານ ແຕ່ລະຂັ້ນຕອນຂອງທຸກໆ ໂຄງການທີ່ໄດ້ນຳໃຊ້ທຶນພາຍໃນ (ການວາງແຜນ/ປະເມີນຄ່າ, ການຕິດຕາມກວດກາ, ການປະເມີນຜົນ) ແມ່ນໄດ້ຮັບການປັບປຸງ.
- ✧ MPI ແລະ DPI ກຳນົດ ແລະ ປະຕິບັດ ເພດານງົບປະມານ ທັງສອງລະດັບຄື ລະດັບແຂວງ ແລະ ສູນກາງ ກັບ ກະຊວງການເງິນ ແລະ ພະແນກການເງິນ.
- ✧ ຈຳນວນ ແລະ ອັດຕາຂອງ ໜີ້ສິນຢູ່ໃນງົບປະມານຂອງໂຄງການລົງທຶນລັດປະຈຳປີ ແມ່ນຫຼຸດລົງ.
- ✧ MPI ແລະ ຂະແໜງການ ກະຊວງຕ່າງໆໄດ້ພັດທະນາແຜນງານຂອງຂະແໜງການ ໂດຍສະເພາະ ເປົ້າໝາຍປະຈຳປີ ແລະ ພາກພື້ນ ແລະ ການແຈກຈ່າຍ ໂຄງການ ລົງທຶນລັດ ທີ່ນຳໃຊ້ທຶນພາຍໃນ ແລະ ໂຄງການ ODA.

## 4. ຜົນກະທົບ

ອີງຕາມການສຳຫຼວດຂໍ້ມູນພື້ນຖານ, ຕົວຊີ້ວັດສຳລັບເປົ້າໝາຍທັງໝົດຄື "ຂະແໜງການຂອງກະຊວງຕ່າງໆ ແລະ ຂະແໜງການພະແນກຕ່າງໆຂອງແຂວງ ໄດ້ປະຕິບັດໂຄງການລົງທຶນລັດ ຢ່າງມີປະສິດທິພາບ ແລະ ປະສິດທິຜົນ ຕາມຕາຕະລາງແຜນງານ ແລະ ສອດຄ່ອງກັບແຜນປະຕິບັດງົບປະມານທີ່ໄດ້ວາງໄວ້ພາຍໃຕ້ແຜນງານຂອງຂະແໜງການທີ່ໄດ້ຮັບການປັບປຸງ" ແມ່ນຍາກທີ່ຈະນຳມາປະຕິບັດ, ແລະ ຍິ່ງໄປກວ່ານັ້ນ ຢ້ານວ່າມັນຈະເປັນການຍາກທີ່ຈະວັດແທກຜົນກະທົບຂອງໂຄງການທີ່ແທ້ຂີງໄດ້ດ້ວຍຕົວຊີ້ວັດເຫຼົ່ານີ້. ສະນັ້ນ, ໂຄງການໃນປັດຈຸບັນແມ່ນກຳລັງປຶກສາຫາລືກັບຝ່າຍລາວເພື່ອດັດແປງຕົວຊີ້ວັດທີ່ບົ່ງບອກຕາມແຜນອາດດັ່ງຕໍ່ໄປນີ້. ຄວາມສຳເລັດຂອງເປົ້າໝາຍທັງມົດແມ່ນຍາກທີ່ຈະຕັດສິນຢູ່ໃນຂັ້ນຕອນນີ້ໄດ້.

ຕາຕະລາງ 3: ບັນຫາຕ່າງໆ ແລະ ຕົວຊີ້ວັດຂອງເປົ້າໝາຍທັງໝົດ

| ຕົວຊີ້ວັດປັດຈຸບັນ | ບັນດາຕົວຊີ້ວັດທີ່ໄດ້ສະເໜີ |
|---|---|
| ຈຳນວນ ແລະ ອັດຕາຂອງໂຄງການລົງທຶນລັດທີ່ນຳໃຊ້ທຶນພາຍໃນ ໄດ້ຫຼຸດລົງ ແລະ ໂຄງການສົມທົບທຶນ ODA ທີ່ບໍ່ໄດ້ສືບຕໍ່ ຫຼື ຖືກໂຈະ ຍ້ອນເຫດຜົນຂອງ ງົບປະມານ. | ຈຳນວນ ແລະ ອັດຕາຂອງໂຄງການລົງທຶນລັດທີ່ນຳໃຊ້ທຶນພາຍໃນໄດ້ຫຼຸດລົງ ແລະ ໂຄງການສົມທົບທຶນ ODA **ໄດ້ສຳເລັດຕາມແຜນເລີ້ມຕົ້ນ**. **ແມ່ນໄດ້ເພີ້ມຂຶ້ນ.** |
| ຈຳນວນ ແລະ ອັດຕາຂອງໂຄງການລົງທຶນລັດທີ່ນຳໃຊ້ທຶນພາຍໃນ ໄດ້ຫຼຸດລົງ ແລະ ໂຄງການສົມທົບທຶນ ODA ທີ່ມີການບູລະນະສ້ອມແປງ ຫຼື ບໍ່ໄດ້ສ້ອມແປງພາຍຫຼັງທີ່ສຳເລັດ. | ຈຳນວນ ແລະ ອັດຕາຂອງໂຄງການລົງທຶນລັດທີ່ນຳໃຊ້ທຶນພາຍໃນໄດ້ຫຼຸດລົງ ແລະ ໂຄງການສົມທົບທຶນ ODA ທີ່**ມີການດູແລຮັກສາຢ່າງຖືກຕ້ອງ ພາຍຫຼັງທີ່ສຳເລັດ ສັບລັບບ້ານ** **ແມ່ນເພີ້ມຂື້ນ** |
| ຈຳນວນ ແລະ ອັດຕາຂອງໂຄງການລົງທຶນລັດທີ່ນຳໃຊ້ທຶນພາຍໃນ ໄດ້ຫຼຸດລົງ ແລະ ໂຄງການສົມທົບທຶນ ODA ທີ່ຢູ່ພາຍໃຕ້ການນຳໃຊ້. | ຈຳນວນ ແລະ ອັດຕາຂອງໂຄງການລົງທຶນລັດທີ່ນຳໃຊ້ທຶນພາຍໃນໄດ້ຫຼຸດລົງ ແລະ ໂຄງການສົມທົບທຶນ ODA **ໄດ້ນຳໃຊ້ ແລະ ດຳເນີນໄປຕາມອປັນແຜນຕົ້ນສະບັບແມ່ນໄດ້ເພີ້ມຂື້ນ** |
| ຈຳນວນ ແລະ ອັດຕາຂອງໂຄງການລົງທຶນລັດທີ່ນຳໃຊ້ທຶນພາຍໃນ ໄດ້ຫຼຸດລົງ ແລະ ໂຄງການສົມທົບທຶນ ODA ທີ່ມີປະສົບການ ເຊິ່ງບໍ່ໄດ້ຄາດວ່າຈະມີການປ່ຽນແປງຢູ່ໃນສັນຍາ. | ລຶບ |
| ຕົວຊີ້ວັດເປົ້າໝາຍໃນແຕ່ລະແຜນງານຂອງຂະແໜງການ ຈະປັບປຸງ. | ຕົວຊີ້ວັດເປົ້າໝາຍຂອງ **ບັນດາ ແຂວງ ແລະ ຂະແໜງການຕ່າງໆ,** ແມ່ນໄດ້ນຳໃຊ້ເປັນມາດຖານໃນການຄັດເລືອກໂຄງການ **PIP** |

## 5. ບັນຫາຕ່າງໆທີ່ຍັງຄົງຄ້າງ

ເປັນຕົວວັດແທກໜຶ່ງຂອງການຝຶກອົບຮົມທີ່ຍືນຍົງຢູ່ໃນ ກະຊວງແຜນການ ແລະ ການລົງທຶນ, ເຊິ່ງໄດ້ມີການເຫັນດີເປັນເອກະພາບກັນວ່າ ກະຊວງແຜນການ ແລະ ການລົງທຶນ ຈະມີສ່ວນກວມເອົາປະມານ 1/3 ຂອງມູນຄ່າໃຊ້ຈ່າຍທີ່ຈໍາເປັນໃນການຈັດຝຶກອົບຮົມທົ່ວປະເທດ ກ່ຽວກັບການຄຸ້ມຄອງໂຄງການລົງທຶນຂອງລັດ. ພາກສ່ວນຂອງ ກະຊວງແຜນການ ແລະ ການລົງທຶນໄດ້ໃຫ້ທຶນສົມທົບ ເປັນຈໍານວນເງິນທີ່ຫຼາຍກວ່າ 321 ລ້ານກີບ, ຢ່າງໃດກໍ່ຕາມ, ເນື່ອງມາຈາກການຂາດທຶນຮອນຈຶ່ງເຮັດໃຫ້ບໍ່ສາມາດຊໍາລະຢູ່ໃນເດືອນພະຈິກໄດ້, ເມື່ອການຝຶກອົບຮົມໄດ້ເລີ້ມຕົ້ນ. ກະຊວງແຜນການ ແລະ ການລົງທຶນ ກັບໂຄງການ ເຫັນດີເປັນເອກະພາບວ່າ ໂຄງການຈະສູ້ຊົນປະຕິບັດ ມູນຄ່າທັງໝົດ ຂອງການຝຶກອົບຮົມ ທົ່ວປະເທດ ກ່ຽວກັບການຄຸ້ມຄອງ ໂຄງການລົງທຶນລັດ, ໃນຂະນະທີ່ມູນຄ່າທັງໝົດ ສໍາລັບ ວຽກງານ OJT, ແມ່ນໄດ້ວາງແຜນວ່າ ຈະເກີດຈາກໂຄງການ, ເຊິ່ງຈະກວມເອົາທຶນສົມທົບຂອງ MPI.

ການຊໍາລະສະສາງທີ່ຊັກຊ້າ ຍ້ອນຂາດທຶນຮອນໃນການເລີ້ມຕົ້ນ ໃນສົກປີ ເບິ່ງຄືຈະເປັນເລື້ອງປົກກະຕິຢູ່ໃນລາວ. ເຖິງຢ່າງໃດກໍ່ຕາມ, ຖ້າວ່າການຝຶກກອົບຮົມໄດ້ສືບຕໍ່ໃນອະນາຄົດ, ໄລຍະເວລາທີ່ເໝາະສົມຢູ່ລະຫວ່າງເດືອນ ພະຈິກ ແລະ ເດືອນທັນວາ, ກ່ອນຂະບວນການສ້າງແຜນງົບປະມານຂະເລີ້ມຕົ້ນ. ສະນັ້ນ, ບັນຫາທີ່ຄ້າຍຄືກັນອາດຈະເກີດຂື້ນ ເຖິງແມ່ນວ່າງົບປະມານເອງຂະມີຄວາມໝັ້ນຄົງພໍ. ບັນຫາບໍ່ແມ່ນບັນຫາຫຼັກຂອງໂຄງການ ແຕ່ມັນເປັນບັນຫາທີ່ມີຢູ່ແລ້ວທີ່ສົ່ງຜົນກະທົບໃຫ້ແກ່ການຄຸ້ມຄອງງົບປະມານປະຈໍາປີຂອງໂຄງການລົງທຶນຂອງລັດ ແລະ ກໍ່ມີການແບ່ງສ່ວນໃນຕົວ. ເຊິ່ງມັນມີຄວາມຈໍາເປັນທີ່ເລີ້ມປຶກສາຫາລື ກັບ ກະຊວງແຜນການ ແລະ ການລົງທຶນ, ກະຊວງການເງິນ ແລະ ອົງການຈັດຕັ້ງທີ່ກ່ຽວຂ້ອງ ເຊັ່ນນັ້ນ ງົບປະມານຂອງໂຄງການລົງທຶນຂອງລັດຈຶ່ງຈະຖືກຊໍາລະໃນເວລາທີ່ຕ້ອງການໄດ້.

## 6. ການສຶກສາ ການທົບທວນຄືນ ໄລຍະກາງ

ການສຶກສາການທົບທວນຄືນໄລຍະກາງ ແມ່ນໄດ້ປະຕິບັດສຳລັບໂຄງການທີ່ຢູ່ລະຫວ່າງ ວັນທີ 23 ເດືອນ ພະຈິກ ຫາ ວັນທີ 8 ເດືອນທັນວາ 2009. ເຊິ່ງທີມງານສຶກສາໄດ້ປະຕິບັດການສຶກສາດັ່ງນີ້.

| ຮັບຜິດຊອບ | ຊື່ | ຕຳແໜ່ງ |
|---|---|---|
| ຫົວໜ້າທີມ | ທ່ານ ໂກອິຈິ ຕະເຄອິ | ຜູ້ແທນ ອາວຸໂສ, ຫ້ອງການ JICA ລາວ |
| ການວາງແຜນຮ່ວມມື | ທ່ານ ນ. ຢູກິ ໂຢຊິຫູລະ | ຜູ້ແທນ, ຫ້ອງການ JICA ລາວ |
| ການວິເຄາະປະເມີນຜົນ | ທ່ານ ໂຢອິຈິໂລະ ໂຕະດະ | ທີ່ປຶກສາ, ສູນພັດທະນາ ສາກົນ ຍີ່ປຸ່ນ |

ທີມສຶກສາ ໄດ້ສະຫຼູບສັງລວມໂດຍອີງໃສ່ຜົນຂອງການປະເມີນດັ່ງຕໍ່ໄປນີ້ ແລະ ມີການໃຫ້ຄຳຄິດເຫັນແກ່ໂຄງການ (ໄດ້ກັ່ນຕອງເອົາຈາກບົດລາຍງານຂອງທີມສຶກສາ).

ຜົນຂອງການປະເມີນໂດຍນຳໃຊ້ 5 ມາດຖານແມ່ນໄດ້ສັງລວມຄືດັ່ງລຸ່ມນີ້.

**1 ສ່ວນທີ່ກ່ຽວຂ້ອງ**

ດ້ວຍເຫດຜົນຕໍ່ໄປນີ້, ສ່ວນທີ່ກ່ຽວຂ້ອງຂອງໂຄງການສາມາດເຊື່ອຖືໄດ້.

ຢູ່ໃນປະເທດລາວ, ໂຄງການພັດທະນາ ແມ່ນໄດ້ປະຕິບັດເປັນໂຄງການລົງທຶນຂອງລັດ (PIP) ພາຍໃຕ້ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ. ໂດຍອີງໃສ່ ດຳລັດຂອງ ນາຍົກລັດຖະມົນຕີ ເລກທີ 58 ປີ 2002, ບັນດາແຂວງ ແລະ ກະຊວງສູນກາງຈະຕ້ອງໄດ້ປະຕິບັດ, ປະເມີນ, ຕິດຕາມກວດກາ, ແລະ ປະເມີນຜົນ ໂຄງການພັດທະນາ ຕ່າງໆ. ອີກຢ່າງໜຶ່ງ, ແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ 6 ໄດ້ລະບຸໄວ້ວ່າ ການພັດທະນາຄວາມອາດສາມາດຂອງ ພະນັກງານລັດ ແມ່ນຄວາມທ້າທາຍອັນຕົ້ນຕໍ. ສະນັ້ນບັນດາແຂວງ ແລະ ກະຊວງຕ່າງໆ ທີ່ຈຳເປັນໃນການສ້າງຄວາມເຂັ້ມແຂງໃນດານຄຸ້ມຄອງໂຄງການລົງທຶນລັດ. ດ້ວຍເຫດນີ້, ຈຸດປະສົງຂອງໂຄງການແມ່ນປະຕິບັດໃຫ້ສອດຄ່ອງກັບນະໂຍບາຍຂອງລາວ.

ໂດຍໃຫ້ຄວາມເຄົາລົບຕໍ່ນະໂຍບາຍຂອງ ຍີ່ປຸ່ນ, ນະໂຍບາຍທຶນສົມທົບ ODA ຂອງ ສປປລາວ ໂດຍກະຊວງການຕ່າງປະເທດໄດ້ກ່າວວ່າ "ການພັດທະນາຄວາມສາມາດຂອງພະນັກງານລັດ ແລະ ການສ້າງຕັ້ງສະຖາບັນ" ແມ່ນໜຶ່ງໃນປະເດັນຕົ້ນຕໍ. ປະເທດຂອງ JICA ໄດ້ໃຫ້ການຊ່ວຍເຫຼືອດ້ານຍຸດທະສາດທີ່ກ່າວວ່າ "ການຍົກລະດັບຄຸນະພາບ ແລະ ຄວາມສາມາດຂອງການບໍລິຫານພາກລັດ" ເປັນພາກສ່ວນໜຶ່ງຂອງບັນຫາຕົ້ນຕໍ. ດັ່ງນັ້ນ, ໂຄງການຢູ່ໃນນະໂຍບາຍການຊ່ວຍເຫຼືອຂອງຍີ່ປຸ່ນ ແກ່ສປປລາວ.

ການກ່ຽວພັນກັບຄວາມຈຳເປັນຂອງກຸ່ມເປົ້າໝາຍ ແມ່ນເຫັນວ່າ ເຊືອໝັ້ນໄດ້, ເພາະວ່າຫົວຂໍ້ການຝຶກອົບຮົມແມ່ນເປັນປະໂຫຍດ ແລະ ສອດຄ່ອງກັບຄຳຕອບຂອງ ນັກສຳມະນາກອນທີ່ເຂົ້າຮ່ວມຝຶກອົບຮົມ ແລະ ຫົວໜ້າ ກົມປະເມີນຜົນ ເຊິ່ງໄດ້ບອກວ່າ ບັນດາແຂວງ ກໍ່ຄືກະຊວງຕ່າງໆ ໃຫ້ການຍອມຮັບຕໍ່ເຄື່ອງມື ທີ່ກະກຽມໂດຍໂຄງການ.

ໃນຫຼາຍກໍລະນີ ຂອງການຊ່ວຍເຫຼືອຈາກຜູ້ໃຫ້ທຶນ, ຊ່ຽວຊານຜູ້ໜຶ່ງມາ ແລະ ຈາກໄປ ໂດຍມີພຽງແຕ່ບົດລາຍງານ ໃນຕອນທ້າຍຂອງໂຄງການ; ແຕ່ຢ່າງໃດກໍ່ຕາມ, ໂຄງການໄດ້ມີການຮັບມືກັບການພັດທະນາຄວາມສາມາດຂອງຄູ່ຮ່ວມງານໄບບຍະຍາວ ແລະ ຈາກນັ້ນ ການຝຶກອົບຮົມກໍ່ກ້າວເຂົ້າສູ່ ການຮ່ວມກັນກັບ OJT ແມ່ນມີຄວາມເໝາະສົມກັບຄວາມຕ້ອງການຂອງຄູ່ຮ່ວມງານ.

**2 ປະສິດທິຜົນ**
ຄວາມມຸ້ງຫວັງເພື່ອໃຫ້ສຳເລັດຈຸດປະສົງຂອງໂຄງການບໍ່ສາມາດສະແດງໃຫ້ເຫັນໃນເວລາ ທົບທວນຄືນໄລຍະກາງ. ດັ່ງນັ້ນ, ປະສິດທິຜົນຈິ່ງບໍ່ສາມາດປະເມີນໄດ້. ການພິຈາລະນາ ໝາກຜົນຂອງຄວາມສຳເລັດ, ທາງດ້ານແງ່ບວກແມ່ນສາມາດພົບເຫັນ ຜົນສຳເລັດຕາມຈຸດປະສົງຂອງໂຄງການ, ເຖິງແມ່ນວ່າຍັງມີການປັບປຸງບາງຢ່າງ ເພື່ອໃຫ້ບັນລຸໝາກຜົນຕ່າງໆ. ລາຍລະອຽດຂອງ ໝາກຜົນຄວາມສຳເລັດມີດັ່ງຕໍ່ໄປນີ້:

ການຄຸ້ມຄອງໂຄງການລົງທຶນລັດ ຄວນຖືກຈັດຕັ້ງປະຕິບັດ ໂດຍປະຕິບັດຕາມກົດໝາຍຂອງ ໂຄງການລົງທຶນຂອງລັດ, ພາຍຫຼັງ ການສ້າງຕັ້ງກົດໝາຍ ວ່າດ້ວຍ ໂຄງການລົງທຶນຂອງລັດ ໃນວັນທີ 27 ພະຈິກ 2009. ຫຼັງຈາກນັ້ນ ຄວາມມຸ້ງຫວັງໃນຈຸດປະສົງ ຂອງໂຄງການ ສາມາດທີ່ຈະວັດແທກໄດ້ຢູ່ໃນຂະບວນການສ້າງແຜນງົບປະມານຂອງສົກປີ 2010/11.

**ໝາກຜ ົນ** 1 ເໝືອນກັບ ຈະປະສົບຜົນສຳເລັດ ເພາະວ່າ ນັກສຳມະນາກອນຝຶກອົບຮົມສາມາດ ຮຽນຮູ້ເອົາຄວາມຮູ້ ແລະ ທັກ ສະຕ່າງໆ ກ່ຽວກັບການຄຸ້ມຄອງໂຄງການລົງທຶນຂອງລັດ. ອີກຢ່າງໜຶ່ງ, ໄດ້ມີການແຈກຢາຍ ເຄື່ອງມືການຝຶກອົບຮົມ ໃຫ້ແກ່ບັນ ດາແຂວງ ແລະ ກະຊວງຕ່າງໆ ແລະ ວາງແຜນໃນການຈັດຝຶກອົບຮົມ ໃນຫົວຂໍ້ ການຄຸ້ມຄອງໂຄງການລົງທຶນຂອງລັດ. ເຊິ່ງມັນ ສາມາດຮັບປະກັນໄດ້ວ່າ ບໍ່ໄດ້ຢູ່ໃນການຄວບຄຸມຂອງ ກະຊວງແຜນການ ແລະ ການລົງທຶນ, ຄວາມຮູ້ ແລະ ທັກສະຕ່າງໆ ແມ່ນ ໄດ້ຖືກແຍກອອກ. ໝາກຜົນ 3 ແມ່ນສາມາດບັນລຸໄດ້ເປັນທີ່ຮຽບຮ້ອຍ ຍ້ອນມີການຮັບຮອງເອົາກົດໝາຍການລົງທຶນຂອງລັດ. ສຳລັບໝາກຜົນ 2 ມີຄວາມສາມາດເປັນໄປໄດ້ສູງ ໃນການສ້າງຄວາມສາມາດໃນການຄຸ້ມຄອງທາງດ້ານການເງິນໃຫ້ເຂັ້ມແຂງ ໂດຍຜ່ານການຝຶກອົບຮົມໃນອະນາຄົດ. ກ່ຽວກັບໝາກຜົນ 4, ກິດຈະກຳຕ່າງໆ ຂອງແຕ່ລະອົງປະກອບຍ່ອຍ (ການສ້າງຄວາມເຂັ້ມ ແຂງໃຫ້ແກ່ການຄຸ້ມຄອງທຶນສົມທົບ ODA, ການຄຸ້ມຄອງໂຄງການລົງທຶນລັດ ໃນລະດັບເມືອງ ແລະ ການຄຸ້ມຄອງແຜນງານຂອງ ຂະແໜງການ) ແມ່ນດຳເນີນໄປໄດ້ດີ. ເຖິງຢ່າງໃດກໍ່ຕາມ, ການຊັກຊ້າໃນການອະນຸມັດ ແບບຟອມກອງທຶນສົມທົບ ODA ແລະ ຄວາມຈຳເປັນໃນການປະສານງານທີ່ກ່ຽວກັບການຄຸ້ມຄອງໂຄງການລົງທຶນລັດ ໃນລະດັບເມືອງຈະເປັນສິ່ງກີດຂວາງຜົນສຳເລັດ ຂອງໝາກຜົນ 4.

**3 ປະສິດທິພາບ**
ໂດຍອີງຕາມຫຼັກຖານອ້າງອີງ, ແມ່ນມີເຫດຜົນພຽງພໍໃນການຮັບປະກັນ, ຄຸນະພາບຂອງໂຄງການ, ເຖິງແມ່ນວ່າຈະມີການຜູກມັດ ກັບຄູ່ຮ່ວມງານທີ່ກ່ຽວຂ້ອງ.

ການປ້ອນຂໍ້ມູນເຂົ້າ ໂດຍທົ່ວໄປແມ່ນສຳເລັດຕາມແຜນທີ່ໄດ້ວາງໄວ້ ໃນR/D ແລະ PDM. ສຳລັບພະນັກງານຂອງຄູ່ຮ່ວມງານ, ຫົວໜ້າກົມປະເມີນຜົນ, ໄດ້ພົວພັນກັບໂຄງການທີ່ເປັນຜູ້ຈັດການໂຄງການຕັ້ງແຕ່ PCAP 1; ແລະ ຫຼັງຈາກນັ້ນ ການພົວພັນຮ່ວມ ມືໃກ້ສິດ ກັບຊ່ຽວຊານ ຂອງ ອົງການ JICA. ຍິ່ງໄປກວ່ານັ້ນ, ພະນັກງານຈຳນວນໜຶ່ງຂອງ MPI ຖືກຍ້າຍໄປພະແນກອື່ນ ຕັ້ງແຕ່ PCAP1 ແລະ ພວກເຂົາໄດ້ພົວພັນຢູ່ໃນໂຄງການ ໂດຍມີຄວາມເຂົ້າໃຈທີ່ພຽງພໍ. ດັ່ງນັ້ນ ຈິ່ງມີການຜູກມັດທີ່ເຂັ້ມແຂງ ກັບ ຄູ່ຮ່ວມ ງານ; ສະນັ້ນ, ມັນຈະງ່າຍໃນການປະສານງານ ໃນການສ້າງ ແລະ ຈັດຕັ້ງປະຕິບັດໂຄງການ.

ໃນທາງກັບກັນ, ກົມຮ່ວມມືສາກົນ (DIC) ໄດ້ກັບມາທີ່ ກະຊວງແຜນການ ແລະ ການລົງທຶນ ໃນປີ 2007; ເຊິ່ງ DIC ແມ່ນມີຄວາມ ເຂົ້າໃຈ ກ່ຽວກັບ ການຄຸ້ມຄອງ ໂຄງການລົງທຶນລັດ ໜ້ອຍກວ່າ ກົມ ປະເມີນຜົນ ແລະ ກົມ ແຜນການ. ອີກຢ່າງໜຶ່ງ, DIC ແມ່ນ ເຫັນວ່າຍັງມີປະລິມານທີ່ບໍ່ທັນພຽງພໍ, ຄຸນະພາບຂອງ ພະນັກງານ ປະເຊີນກັບບາງບັນຫາທີ່ຫຍຸ້ງຍາກ ກັບວິທີການທີ່ແຕກຕ່າງ ຂອງຜູ້ໃຫ້ທຶນ. ດັ່ງນັ້ນ, ພະນັກງານຂອງ DIC ຈະຕ້ອງໄດ້ເຂົ້າຮ່ວມໃນການຝຶກອົບຮົມສຳລັບຈຸດປະສົງເພື່ອສ້າງຄວາມເຂັ້ມແຂງ ແລະ ການສື່ສານກັບ DIC ຄວນມີການຊຸກຍູ້ ເພື່ອໃຫ້ມີການຍົກລະດັບປະສິດທິພາບຂອງໂຄງການຂຶ້ນຕື່ມ.

**4 ຜົນກະທົບ**
ເມື່ອຄວາມຄາດຫວັງເພື່ອໃຫ້ສຳເລັດເປົ້າໝາຍທັງໝົດ ບໍ່ສາມາດວັດແທກໄດ້, ແລະ ບໍ່ພົບເຫັນຜົນກະທົບໃນທາງລົບ.

**5 ຄວາມຍືນຍົງ**
ຕາມຫຼັກຖານອ້າງອີງດັ່ງຕໍ່ໄປນີ້, ມັນແມ່ນເຫດຜົນທີ່ຮັບປະກັນເຖິງຄວາມຍືນຍົງ ພຍຫຼັງສິ້ນສຸດໂຄງການ. MPI-DOE ມີຄວາມ ສາມາດພຽງພໍ ໃນການບໍລິຫານ ການຝຶກອົບຮົມ ຈາກຈຸດທີ່ມີເຫດມີຜົນ ແລະ ຍືນຍົງ ໂດຍຜ່ານປະສົບການຂອງການຝຶກອົບຮົມ ທົ່ວປະເທດກ່ອນ ຂະບວນການສ້າງແຜນງົບປະມານໃນ ສົກປີ2009/10. ແລະ ຫຼັງຈາກນັ້ນ ພະນັກງານຂອງ ພະແນກແຜນການ ແລະ ການລົງທຶນ 6 ທ່ານ ຈາກ 3 ແຂວງຕົວແບບ ແມ່ນມີຄວາມສາມາດເປັນຜູ້ບັນລະຍາຍໄດ້ຄືເປັນຄູຝຶກຮ່ວມ. ແລະ ກໍ່ເຊັ່ນດຽວ

ກັນ, ມັນສະແດງໃຫ້ເຫັນວ່າພະນັກງານຂອງບັນດາ ອົງການຈັດຕັ້ງ ແລະ ກະຊວງຕ່າງໆ ທີ່ຢູ່ສູນກາງ (ກະຊວງການເງິນ, ກະຊວງສາທາ, ແລະ ສະຖາບັນຄົ້ນຄວ້າ ກະສິກຳ ແລະ ປ່າໄມ້ ແຫ່ງຊາດ), ຜູ້ທີ່ໄດ້ເຂົ້າຮ່ວມການຝຶກອົບຮົມທີ່ຈັດໂດຍ ກະຊວງແຜນການ ແລະ ການລົງທຶນ , ແລະ ໄດ້ປະຕິບັດການແຈກຢາຍ ອຸປະກອນການຝຶກອົບຮົມ ໃຫ້ແກ່ເພື່ອນຮ່ວມງານຂອງເຂົາດ້ວຍຕົວຂອງພວກເຂົາເອງ. ອີກຢ່າງໜຶ່ງ, ບາງກະຊວງ ກໍ່ມີຄວາມຕັ້ງໃຈທີ່ຈະຈັດການຝຶກອົບຮົມຢູ່ໃນກະຊວງຂອງພວກເຂົາເອີງ.ດັ່ງນັ້ນ, ພວກເຂົາຈິ່ງຢາກສະເໜີໃຫ້ MPI ສົ່ງຜູ້ບັນລະຍາຍການຝຶກອົບຮົມມາໃຫ້ກະຊວງຢ່າງຮີບດ່ວນ. ອີງຕາມທ່ານ ວິໄຊ ຊາວັນນາ, ຫົວໜ້າກົທ ປະເມີນຜົນ, ຢູ່ໃນຊາງເມືອງໄດ້ສ້າງ "ຂໍ້ມູນໂຄງການ" ຕາມຫົວຂໍ້ການຝຶກອົບຮົມ ທີ່ໄດ້ສົ່ງມາແຕ່ MPI. ເຫດການນີ້ໄດ້ພິສູດໃຫ້ເຫັນວ່າ ຄວາມຍືນຍົງທາງດ້ານວິຊາການ ກໍ່ເຮັດໃຫ້ເຊື່ອໝັ້ນໄດ້. ກົດໝາຍວ່າດ້ວຍການລົງທຶນຂອງລັດ ໄດ້ຖືກສ້າງຂື້ນໃນເດືອນ ພະຈິກ 2009 ແລະ ກອບວຽກທາງດ້ານກົດໝາຍຂອງ ການຄຸ້ມຄອງໂຄງການລົງທຶນຂອງລັດກໍ່ໄດ້ຖືກຈດກຽມໄວ້.ດັ່ງນັ້ນ ຄວາມຍືນຍົງຂອງສະຖາບັນກໍ່ສາມາດໃຫ້ຄວາມເຊື່ອໝັ້ນໄດ້ເຊັ່ນກັນ. ຍິ່ງໄປກວ່ານັ້ນ, ມັນແມ່ນພາກສ່ວນໜຶ່ງໃນການວັດແທກຂອງບຄວາມຍືນຍົງຂອງສະຖາບັນ ເຊິ່ງ MPI ມີສ່ວນຮ່ວມນຳພະແນກຈັດຕັ້ງ ແລະ ອົງການຈັດຕັ້ງ ແລະ ສູນຝຶກອົບຮົມຂອງ MPI ຢູ່ໃນການຝຶກອົບຮົມກ່ຽວກັບ ການຄຸ້ມຄອງໂຄງການລົງທຶນລັດຂອງ ກົມປະເມີນຜົນ ເພື່ອຈະກຳນົດ ໃຫ້ການຝຶກອົບຮົມເປັນການຝຶກອົບຮົມແບບຖາວອນ. ດັ່ງນັ້ນ ການປຶກສາຫາລື ໃນຕໍ່ໜ້າ ກ່ຽວກັບ ການຝຶກອົບຮົມ ການຄຸ້ມຄອງໂຄງການລົງທຶນຂອງລັດໂດຍນຳໃຊ້ສູນຝຶກອົບຮົມ ຂອງ MPI ເຊິ່ງມີຄວາມຈຳເປັນຕໍ່ ກົມປະເມີນຜົນ ແລະ ສູນຝຶກອົບຮົມ.

ຢູ່ໃນພາກສ່ວນຂອງມູນຄ່າຝຶກອົບຮົມ ຈຳນວນ ( 34,57 ລ້ານກີບ) ສຳລັບການຝຶກອົບຮົມປີທີ 2 ທົ່ວປະເທດເຊິ່ງໄດ້ຮູ້ກ່ຽວກັບ ຂະບວນການສ້າງແຜນງົບປະມານຂອງ ສໄກປີ 2010/11ໂດຍສະພາແຫ່ງຊາດ ທີ່ເປັນທຶນສົມທົບຂອງໂຄງການລົງທຶນຂອງລັດ, ແລະ ກໍ່ມີຂໍ້ຜູກພັນກັບຝ່າຍລາວຢ່າງເລິກເຊິ່ງ. ແຕ່ເຖິງຢ່າງໃດກໍ່ຕາມ, ກະຊວງການເງິນ ກໍ່ໄດ້ຍົກເລີກການຊຳລະເງິນ, ຕັ້ງແຕ່ຄຳຕອບສຸກເສີນ ໄດ້ສະເໜີເຖິງຄວາມເສັຍຫາຍ ຂອງ ພະຍຸໃຕ້ຝຸ່ນ ເກດສະນາ ໃນເດືອນ ຕຸລາ 2009. ງົບປະມານສຳລັບການຝຶກອົບຮົມ ການຄຸ◌ຸ◌້ມຄອງການລົງທຶນລັດ ແມ່ນຄາດຫວັງວ່າຈະມີຄວາມແນ່ນອນ ໃນໄຕມາດຂອງສົກປີຕໍ່ໄປ.

## 6 ປັດໃຈຕ່າງໆ ທີ່ສົ່ງເສີມໃຫ້ເກີດຜົນເປັນຈິງ

ການສົ່ງເສີມປັດໃຈຕ່າງໆ ໃຫ້ປະກົດຜົນເປັນຈິງມີດັ່ງຕໍ່ໄປນີ້: ກ່ອນອື່ນໝົດ, ຫົວຂໍ້ຂອງການຝຶກອົບຮົມ ແມ່ນສາມາດໃຊ້ໄດ້ ແລະເປັນປະໂຫຍດໂດຍກົງຕໍ່ການຄຸ້ມຄອງໂຄງການລົງທຶນຂອງລັດຕົວຈິງ. ນັກສຳມະນາກອນຂອງການຝຶກອົບຮົມໄດ້ໃຫ້ຄຳເຫັນວ່າພວກເຂົາໄດ້ມີຄວາມເຂົ້າໃນບໍ່ພຽງແຕ່ທາງດ້ານທິດສະດີເທົ່ານັ້ນ ແຕ່ຍັງຮູ້ວິທີການນຳໃຊ້ທິດສະດີເຂົ້າໃນການປະຕິບັດຕົວຈິງຜ່ານການເຮັດວຽກເປັນກຸ່ມ. ແລະ ນັກສຳມະນາກອນບາງກທ່ານໄດ້ກ່າວວ່າ "ການປະເມີນຜົນແບບປຽບທຽບ" ແມ່ນເປັນປະໂຫຍດໃນການຈັດວາງບູລິມະສິດ ແລະ ຄັດເລືອກໂຄງການ ເພື່ອຈັດເຂົ້າໃນງົບປະມານທີ່ມີຈຳກັດ. ແລະກໍ່ເຊັ່ນດຽວກັນ ສັງເກດເຫັນວ່າການສົ່ງເສີມການຝຶກອົບຮົມໃຫ້ມີຜົນຕໍ່ການຝຶກອົບຮົມການຄຸ້ມຄອງໂຄງການລົງທຶນຂອງລັດ ແມ່ນໄດ້ວາງແຜນໄດ້ກ່ອນຈະມີຂະບວນການສ້າງແຜນງົບປະມານຕົວຈິງ ແລະ OJT ກໍ່ໄດ້ປະຕິບັດຕາມການຝຶກອົບຮົມ ເພື່ອສ້າງການນຳໃຊ້ຫົວຂໍ້ຂອງການຝຶກອົບຮົມຕ່າງໆ ເຂົ້າໃນຂະບວນການເຮັດວຽກຕົວຈິງ.

ໂດຍອີງໃສ່ລະບົບຂອງການຄຸ້ມຄອງບໍລິຫານ, ເຫັນວ່າ ສາຍພົວພັນການຮ່ວມມື ລະຫວ່າງ ຊ່ຽວຊານຂອງ ອົງການຮ່ວມມືສາກົນ JICA ແລະ ກົມປະເມີນຜົນ ກະຊວງແຜນການ ແລະ ການລົງທຶນ ເປັນໄປໃນແງ່ບວກ. ທ່ານຫຫົວໜ້າ ກົມປະເມີນຜົນ ໄດ້ມີການຜູກພັນຢ່າງຕໍ່ເນື່ອງຢູ່ໃນໂຄງການ ໃນຖານະທີ່ເປັນຜູ້ຈດການໂຄງການ ໃນ 5 ປີຕໍ່ໜ້າ ແລະ ພະນັກງານອື່ນໆ ກໍ່ໄດ້ຢູ່ໃນໂຄງການເຊັ່ນດຽວກັນ. ດ້ວຍເຫດນີ້, ປະສົບການ ແລະ ຄວາມຊຳນິຊຳນານຕ່າງໆຈິ່ງໄດ້ສະສົມຢູ່ໃນ ກະຊວງແຜນການ ແລະ ການລົງທຶນມາຕັ້ງແຕ່ໂຄງການ PCAP 1, ແລະ ຫຼັງຈາກນັ້ນ, ສາຍພົວພັນທີ່ໃກ້ສິດລະຫວ່າງ ກະຊວງແຜນການ ແລະ ການລົງທຶນ ກັບຊ່ຽວຊານຂອງ ອົງການຮ່ວມມືສາກົນ JICA ຈິ່ງໄດ້ຖືກສົ່ງເສີມໃຫ້ດີຂື້ນເລື້ອຍໆ.

## 7 ປັດໃຈຕ່າງໆ ທີ່ຂັດຂວາງ ການປະກົດຜົນເປັນຈິງ

ມີຢູ່ 2 ປັດໃຈຕົ້ນຕໍໃນການຂດຂວາງ ການປະກົດຜົນເປັນຈິງ. ປັດໃຈທຳອິດແມ່ນການສ້າງກົດໝາຍວ່າດ້ວຍການລົງທຶນຂອງລັດຊັກຊ້າ. ກົດໝາຍແມ່ນໄດ້ຄາດຄະເນວ່າ ຈະຖືກຍອມຮັບເອົາ ໂດຍສະພາແຫ່ງຊາດໃນເດືອນ ທັນວາ ປີ 2008; ແຕ່ເຖິງຢ່າງໃດກໍ່ຕາມ, ມັນກໍ່ບໍ່ໄດ້ເປັນຄືແນວນັ້ນ. ແລະ ຫຼັງຈາກນັ້ນ ກົດໝາຍກໍ່ຖືກຮັບຮອງເອົາ ໃນເດືອນ ພະຈິກ 2009. ການສ້າງກົດໝາຍວ່າດ້ວຍ ການລົງທຶນຂອງລັດທີ່ຊັກຊ້າ ເປັນສາເຫດໃຫ້ ຜົນສຳເລັດຂອງໝາກຜົນ 3 ກໍ່ຊັກຊ້າ. ຍິ່ງໄປກວ່ານັ້ນ ປື້ມຄູ່ມືຕ່າງໆ ໄດ້ກະກຽມ ຈາກຜົນໄດ້ຮັບຂອງໂຄງການ ໃນເວລາທີ່ໄດ້ແຈກຢາຍທີ່ບໍ່ເປັນທາງການ ແລະ ການຈັດພິມເອກະສານຄູ່ມືຕ່າງໆ ແມ່ນໄດ້ເລື່ອນໄປພິທໃນປີໜ້າ.

ປັດໃຈທີ 2, ການຍອມຮັບເອົາແບບຟອມຂອງທຶນສົມທົບ ODA ແມ່ນຊັກຊ້າ. ເຊິ່ງມນຈະເປັນສິ່ງກີດຂວາງ ຜົນສຳເລັດຂອງ ໝາກຜົນ 4.

## 8 ສະຫຼຸບ

ໂຄງການໄດ້ສ້າງຄວາມຄືບໜ້າທີ່ແທ້ຈິງ ສຳລັບ ໝາກຜົນ1 ແລະ ໝາກຜົນ 3. ຕາມມາດ້ວຍໝາກຜົນ 2 ແລະ ໝາກຜົນ 4, ສືບຕໍ່ສະໜັບສະໜູນແກ່ກິດຈະກຳ ຈະເຮັດໃຫ້ເກີດຜົນສຳເລັດແກ່ໝາກຜົນຕ່າງໆ.

ເຖິງແມ່ນວ່າໂຄງການຈະມີຄວາມທ້າທາຍບາງຢ່າງ, ໂດຍສະເພາະຢູ່ໃນໝາກຜົນ 2 ແລະ ໝາກຜົນ 4, ໃນໄລຍະເວລາທີ່ຍັງເຫຼືອຂອງໂຄງການ, ຈຸດປະສົງຂອງໂຄງການໄດູ້າດວ່າຈະປະສົບຜົນສຳເລັດ ດ້ວຍການສືບຕໍ່ ພະຍາຍາມໃນປັດຈຸບັນ ໂດຍປາດສະຈາກການປ່ຽນແປງ ປັດໃຈສຳຄັນຕົ້ນຕໍ ໃນການອອກແບບໂຄງການ.

## 9.ການໃຫ້ຄຳຄິດເຫັນ

ການສະແດງຄຳຄິດເຫັນຕໍ່ໂຄງການໂດຍອີງໃສ່ ຄວາມສຳເລັດຕ່າງໆ ທີ່ໄດ້ກ່າວມາຂ້າງເທິງນັ້ນ ແລະ ການປະເມີນຜົນໂດຍນຳໃຊ້ 5 ມາດຖານ ມີຄືດັ່ງຕໍ່ໄປນີ້:

(1) ການສ້າງຄວາມເຂັ້ມແຂງ ໃນການຄຸ້ມຄອງທາງດ້ານການເງິນ ໂດຍຜ່ານການຊ່ວຍເຫຼືອທາງດ້ານວິຊາການ ສຳລັບການຈັດຕັ້ງປະຕິບັດ ດຳລັດຕ່າງໆ

ໝາກຜົນ 2 ແມ່ນໝາກຜົນທີ່ມີຄວາມສຳຄັນ ໃນການສ້າງການຈັດຕັ້ງປະຕິບັດ ດຳລັບຕ່າງໆ ຂອງ ກົດໝາຍການລົງທຶນຂອງລັດກ່ຽວກັບ ການຄຸ້ມຄອງທາງດ້ານການເງິນ ເຊິ່ງການຄຸ້ມຄອງທາງດ້ານການເງິນ ຄວນຈະສຳເລັດຢ່າງຖືກຕ້ອງໃນການຄຸ້ມຄອງ ໂຄງການລົງທຶນຂອງລັດ, ດຳລັດຕ່າງໆ ວ່າດ້ວຍການຈັດຕັ້ງປະຕິບັດ ໄດ້ລະບຸການຄຸ້ມຄອງທາງດ້ນການເງິນ ດ້ານວິຊາການ. ດັ່ງນັ້ນ, ເຖິງແມ່ນວ່າ ກົດໝາຍວາດ້ວຍການລົງທຶນຂອງລັດ ຈະຖືກຮັບຮອງເອົາ, ໂຄງການໄດ້ແນະນຳໃຫ້ມີການສືບຕໍ່ ໃຫ້ການສະໜັບສະໜູນທາງດ້ານວິຊາການ ໃຫ້ແກ່ການສ້າງດຳລັດ ການຈັດຕັ້ງປະຕິບັດ ໂດຍສະເພາະກ່ຽວກັບ ການຄຸ້ມຄອງທາງດ້ານການເງິນ ເຊັ່ນວາ: ເພດານງົບປະມານ ໃນການຍົກລະດັບການຄຸ້ມຄອງທາງດ້ານການເງິນທີ່ຖືກຕ້ອງ ຂອງການຄຸ້ມຄອງ ໂຄງການລົງທຶນຂອງລັດ.

(2) ການຍົກລະດັບ ການລວບລວມຂໍ້ມູນ ຂອງກິດຈະກຳຂອງຜູ້ໃຫ້ທຶນອື່ນໆ ແລະ ການປະສານງານກັບຜູ້ໃຫ້ທຶນອື່ນໆ

ຜູ້ໃຫ້ທຶນອື່ນໆ ມີບາງໂຄງການທີ່ກ່ຽວຂ້ອງ, ເຊັ່ນໂຄງການ SOP ຂອງ ທະນາຄານໂລກ ແລະ ໂຄງການ NIM ຂອງ UNDP. ພາຍໃຕ້ການປະກາດແຈ້ງການຂອງ ວຽງຈັນ, ກອບວຽກການປະສານງານ ເຊິ່ງຍີ່ປຸ່ນກໍ່ໄດ້ເຂົ້າຮ່ວມເຊັ່ນກັນ, ຫ້ອງການຂອງອົງການຮ່ວມມືສາກົນ JICA ປະຈຳລາວ ຄວນມີການປະສານງານ ແລະ ກັບຜູ້ໃຫ້ທຶນອື່ນໆ. ໃນຂະບວນການປະສານງານກັບ ຜູ້ໃຫ້ທຶນອື່ນ ໂຄງການຄວນໃຫ້ການສະໜັບສະໜູນໃນການເກັບກຳຂໍ້ມູນ ໃນໂຄງການ ແລະ ກິດຈະກຳ ຂອງຜູ້ໃຫ້ທຶນອື່ນໆ. ດັ່ງນັ້ນການປະສານງານກັບຜູ້ໃຫ້ທຶນອື່ນ ແມ່ນການອຳນວຍຄວາມສະດວກ ແລະ ປະສິດທິຜົນຂອງໂຄງການກໍ່ໄດ້ຖືກລະດັບຂຶ້ນຕື່ມ.

(3) ກ້າວເຂົ້າສູ່ການຍົກລະດັບການຄຸ້ມຄອງ ກອງທຶນສົມທົບ ODA

ສິດທິຂອງ ແບບຟອມກອງທຶນສົມທົບ ODA ແມ່ນຈຳເປັນຕ້ອງມີການປຶກສາຫາລື ກັບ ກົມແຜນການ ແລະ ກົມຮ່ວມມືສາກົນ. ການຄວາມຊັດເຈນ ແລະ ການຈັດແບ່ງ ໜ້າທີ່ ຢູ່ໃນ ກົມປະເມີນຜົນ, ກົມ ແຜນການ ແລະ ກົມຮ່ວມມືສາກົນ ແມ່ນສາມາດປຶກສາກັນໄດ້. ອີກຢ່າງໜຶ່ງ, ການສ້າງຄວາມເຂັ້ມແຂງໃຫ້ແກ່ ພະນັກງານ ກົມຮ່ວມມືສາກົນ ຄວນໃຫ້ພະນັກງານ ຂອງກົມຮ່ວມມືສາກົນ ມີສ່ວນເຂົ້າຮ່ວມການຝຶກອົບຮົມໃນຕໍ່ໜ້າ, ຂໍ້ດີຂອງຄວາມເຂົ້າໃຈ ຂອງວິທີການ ຂອງ ການຮ່ວມມື ທາງດ້ານວິຊາການຂອງ ອົງການຮ່ວມມືສາກົນຍີ່ປຸ່ນ JICA.

## 7. ປະເດັນສຳຄັນອື່ນໆ

ໂຄງການໄດ້ມີໂອກາດແນະນຳ ໂຄງຮ່າງ ແລະ ເຄື່ອງມື ປະເມີນໂຄງການ ໃນຫຼັກສູດ ປະລິນຍາ ໂທບໍລິຫານທຸລະກິດ "ການຄຸ້ມຄອງ ໂຄງການ", ຢູ່ທີ່ມະຫາວິທະຍາໄລແຫ່ງຊາດລາວ, ໂດຍການ ສະໜັບສະໜູນ ຂອງ ສູນຊັບພະຍາກອນມະນຸດ ລາວ-ຍີ່ປຸ່ນ.

ເອກະສານຊ້ອນທ້າຍ 1

"Report of Nationwide PIP Management Training and PCAP2 Mid-term Seminar in Fiscal Year 2009/2010 (First and Second Dispatch)"

# Report of
# Nationwide PIP Management Training and PCAP2 Mid-term Seminar
# in Fiscal Year 2009/2010 (First and Second Dispatch)

**From November 31st to December 25th**

**In Houaphanh Province , Xiengkhouang Province, Bolikhamxay Province, Vientiane Province and Vientiane Capital**

# I. Basic Information

I-1. **Overall Objectives :** In Fiscal Year 2009/2010, PCAP2 organize its second PIP management training session (hereafter referred as "the Training") with the theme of "brush-up and upgrade" following the training held last year which made success in "coverage" or disseminating the management tools to the whole 16 provinces and Vientiane Capital. The overall objectives of the Training organized this year are in order to share the last year results of the PIP annual budget formulation for the whole country, brushing up the existing knowledge of the government officers and introducing upgraded and newly developed tools by PCAP 2.

| **Overall Objectives of the Training** |
|---|
| - To brush-up existing knowledge and skills about PIP Management and introduce upgraded and newly developed tools to government officers involved in PIP management, namely DPI officers and project owners from the sector departments in 16 provinces and the Capital<br>- To share the results of the PIP annual budget formulation of last year |

Firstly, this year's Training main focus is about on-going projects, because from observation and analysis of last year's results regarding PIP Management, only a few provinces gave importance in assessing on-going projects. On that basis, the training has been designed in order to address an important message about the assessment of on-going projects.

✓ ***Brush-up and upgraded***
- Progress report writing of ongoing projects
- assessment of ongoing projects
- Sector Program management
- Comparative assessment

Another main focus is the introduction of new management methods and tools as listed below.

✓ ***Newly Introduced***
- Debt payment report writing for on-going projects
- PIP management at district level
- ODA national contribution budget management

It should also be noted that the PCAP2 mid-term seminar (hereafter referred as "the Seminar") is jointly held with the Training to share the progress and future activities of PCAP2 and to disseminate the newly approved PIP law[1] to the provincial government officers involved in PIP management.

[1] PIP law was approved at the National Assembly on 27 November 2009.

### I-2. Specific objectives to each component

Specific objectives to each component or topic of the Training are as follows[2].

| Existing and Upgraded Components |
|---|
| **-Progress Report and SPAS for Ongoing Projects** |
| 1. For project owners to understand the difference between the two types of on-going projects, namely ongoing PIP projects and debt repayment projects.<br>2. For project owners to understand the importance of writing progress reports for on-going projects and submit to the concerned agencies.<br>3. For DPI to understand the methodologies of assessment or procedure of on-going projects by the different types of on-going projects. |
| **-Sector Program Management** |
| 1. Understand the structure of the Program Tools through case studies mentioned in Program Manual.<br>2. Analyze present 5 year plan of each department<br>3. Discuss problems in structure of the plans<br>4. Conclude and compile recommendation for the next 5 year plans. |
| **-Modified Comparative Assessment** |
| 1. Review the Comparative Assessment process and its method.<br>2. Understand the necessity of including ODA project that require counterpart funding within the Comparative Assessment workshop.<br>3. Review the roles of the PO and DPI in the Comparative Assessment workshop.<br>4. Understand how to approach the Decision Maker on the outputs of the Comparative Assessment workshop. |

| New Components |
|---|
| **-Debt Payment Report for Ongoing Projects** |
| 1. Understand the difference between ongoing PIP projects and debt repayment projects.<br>2. Understand the necessity of sharing information concerning PIP debt repayment projects among the Project Owner and DPI.<br>3. Understand the procedures and methods of requesting budget for debt repayment in completed PIP projects.<br>4. Understand the procedures and methods of assessing debt repayment PIP projects. |
| **-PIP Management at District Level** |
| 1. Understand the importance of district-level PIP management as a national priority.<br>2. Understand the roles of provincial levels for support of PIP management in districts, koumbans and villages<br>3. Understand the various existing routes and process of PIP project request, and |

[2] The component of ODA national contribution budget management is incorporated from the second dispatch of the Training.

| |
|---|
| **4. Planning a realistic strategy for district training at the provincial levels** |
| **-ODA National Contribution Budget Management** |
| **1. Understand objective of SPIS**<br>**2. Understand SPIS workflow**<br>**3. Understand structure of SPIS**<br>**4. Learn how to fill up SPIS sheets A and B**<br>**5. Try to fill up SPIS sheets A and B**<br>**6. Share information about data source documents for SPIS** |

### I-3. MPI/PCAP2 Training Team Composition and Responsibility

Overall, MPI training teams are composed of 20 officers in total from Department of Evaluation (DOE), Department of International Cooperation (DIC), Department of Planning (DOP), and Department of Organization and Personnel (DOOP) of MPI, described as follows.

| Name of departments composing the training teams | Number of officers |
|---|---|
| Department of Evaluation (DOE) | 11 officers |
| Department of International Cooperation (DIC) | 2 officers |
| Department of Planning (DOP) | 1 officer |
| Department of Organization and Personnel (DOOP) | 3 officers as Training coordinators and evaluators |
| PCAP2 coordinators (DOE) | 3 officers |
| **Total** | **20 officers** |

When conducting the Training, three MPI training teams are composed and each team is responsible for delivering the Training to each respective province. Besides the team members, the MPI high ranking officers also participate to the Training and the Seminar to disseminate the newly approved PIP law to provincial government officers involved in PIP management. On the other hand, PCAP 2 coordinators are responsible for managing the Training as a whole, while Japanese experts , together with local consultants, are in charge of assisting the Training, validating the effectiveness of introduced methods and tools, and evaluating the effectiveness of the Training as a whole.

### I-4. Target and Schedule of the Training Session

Target trainees are approximately 629-799 provincial government officers involved in PIP management in total, namely DPI officers and project owners from the sector departments in all the 16 provinces and the Capital. It should also be noted that the Training main target are the officers who attended the last year’s training.

The whole Training session is from November 2009 to February 2010 which is divided into the four dispatches targeting each respective province as follows.

| Dispatch | Date | Team 1 | Team 2 | Team 3 |
|---|---|---|---|---|
| 1st Dispatch | Nov 30-Dec 4, 2009 | Xiengkhouang | Houaphanh | |
| 2nd Dispatch | Dec 21-Dec 25, 2009 | Bolikhamxay | Vientiane Capital | Vientiane pro |
| 3rd Dispatch | Jan 4-Jan 8, 2010 | Oudomxay | Luangnamtha | Sayabouly |
| | Jan 11-Jan 15, 2010 | Phongsaly | Bokeo | Luangprabang |
| 4th Dispatch | Jan 25-Jan 29, 2010 | Attapeu | Saravan | Savannakhet |
| | Feb 01-Feb 05, 2010 | Xekong | Champasak | Khammmouane |

### I-5. Agenda of the Training

Duration of the Training with the Seminar is 5 days in total per province, in which the first half day is designed to hold the PCAP 2 mid-term seminar and the following 4 days and a half to organize the Training. See the appendix 1 for an example of the 5 day agenda of the Training and the Seminar

## II. Results of the 1st and 2nd Dispatch of the Training in Houaphanh, Xiengkhouang, Vientiane Capital, Vientiane Province and Bolikhamxay Province

### II-1.MPI Team Members

The members responsible for the 1st and 2nd dispatch of the training held in provinces, was composed by Mr Vixay XAOVANNA, Director of DOE, Mr Phoukhong Bannavong, Deputy Director of DOE, Mr Sengmany Keolangsy, Deputy Director of DOE, Mr Khankham Sengaphay, Deputy Director of DOE, and the three MPI training teams.

### II-2. Attendants

The number of attendants in the Training in the 1st and 2nd dispatches is, as follows:

| Organization | | Houaphanh | Xiengkhouang | Vientiane Province | Vientiane Capital | Bolikhamxay | Total (person) |
|---|---|---|---|---|---|---|---|
| DPI | Planning | 10 | 8 | 20 | 11 | 14 | 63 |
| PO | Eco sector | 9 | 5 | 6 | 8 | 8 | 36 |
| PO | Soc sector | 4 | 5 | 2 | 3 | 4 | 18 |
| PO | Others | 21 | 19 | 24 | 32 | 19 | 115 |
| **TOTAL** | | **44 (36)** | **37 (31)** | **52 (32)** | **54 (48)** | **45 (36)** | **232 (183)** |

*in (), is the number of participants who completed the evaluation form and passed the completion test in each province

- Here is the total number of participants to the training from day 1 to day 5 (or until day 4 for dispatch 1)

### II-3. Schedule

The Training and Seminar (half day) for the 1st and 2nd dispatch, were held from November 30th to December 25th 2009 , for a total of 4 days per province for the 1st dispatch and 5 days per province for the 2nd dispatch.

**II-4. Main Findings and issues identified in the training session**

- Below are the main findings and issues identified in the training session based on the observation by PCAP2 Japanese experts and local consultants in Houaphanh, Xiengkhouang, Vientiane Capital, Vientiane Province and Bolikhamxay province between 30th November and 25th December 2009. All the seven components, "*Progress Report for on-going projects*", "*SPAS for on-going projects*", *and* "*Debt Payment Report for on-going projects*", "*PIP Management at district level*", "*Sector Program Management*", "*ODA national contribution budget management*" and "*Modified comparative assessment*", were observed.

